ຂອບຂອງບົດວິໄຈ
ທວນຄືນ 10 ປີ ວຽກງານພັດທະນາ
ຄັ້ງວັນທີ 26/2/2002

ຫົວຂໍ້

- ການປູກມອນລ້ຽງມ້ອນ ຢູ່ ແຂວງ ຫົວພັນ
- ການປູກມອນລ້ຽງມ້ອນ ຢູ່ ວ້ຽງ
- ຊົນລະປະທານຂະໜາດນ້ອຍ ແລະ ຊົນລະປະທານຄອບຄົວ
- ປ່າໄມ້ຊາວບ້ານ ຢູ່ແຂວງ ຄຳມ່ວນ

PDF created with pdfFactory Pro trial version www.pdffactory.com

ລາຍຊື່ ແລະ ອົງການ ຂອງຜູ້ເຂົ້າຮ່ວມປະຊຸມ

1. ທ່ານ ກ້າແກ້ວ	(QUAKERS)
2. ທ່ານ ຄ້າແກ້ວ	(QUAKERS)
3. ທ່ານ ນ.ວຽງຊອງ	(QUAKERS)
4. ທ່ານ ນ.ໄຊສະນຸກ	(JVC)
5. ທ່ານ ອາກິລາ	(JVC)
6. ທ່ານ ສົມບັດ	(PADETC)
7. ທ່ານ ນ.ເພັນທິດ	(TERRA)
8. ທ່ານ ນ.ລັນທະລິນາ	(TERRA)
9. ທ່ານ ນ.ບຸນຈັນ	(MCC)
10. ທ.ແສງຊຸລິ	(PADETC)
11. ນ.ແສງເພັດ	(PADETC)

PDF created with pdfFactory Pro trial version www.pdffactory.com

ໂຄງການວິໄຈທ້ອນຕົ້ນ 10 ປີ ລຸ່ມກ່ວ່ານພັດທະນາ

ຫົວຂໍ້1. ການເພີ່ມລາຍໄດ້ ແລະ ເພີ່ມທ່າແຮງຂອງຊຸມຊົນຈາກການປູກມອນລ້ຽງມ້ອນ

ຫົວຂໍ້ 1.1: ບົດບາດຂອງການ ປູກມອນລ້ຽງມ້ອນ ໃນການເພີ່ມລາຍໄດ້ ແລະ ຊຸກຍູ້ບົດບາດແມ່ຍິງກໍ ລະນີສຶກສາ ບ້ານນາສາ ເມືອງລ້ຽງໄຊ ແຂວງຫົວພັນ

ຊາວບ້ານ ບ້ານນາສາ ເມືອງລ້ຽງໄຊ ແຂວງຫົວພັນ ເປັນຄົນທີ່ມີຄວາມຊຸກມັ່ນ, ມີອາຊີບເຮັດນາ ແລະ ເຮັດໄຮ່ເປັນຕົ້ນຕໍ, ປູກຝ້າ ລ້ຽງສັດ ແລະ ປູກມອນລ້ຽງມ້ອນ ເປັນອາຊີບສໍາຮອງ. ຜ່ານມາຊາວ ບ້ານຍັງທຸກຈົນຂາດເຂີນ, ເຂົ້າບໍ່ທັນກຸ້ມກິນຕະຫຼອດປີ, ລາຍໄດ້ຂອງຄອບຄົວຕ່ໍາ. ການປູກມອນລ້ຽງ ມ້ອນແມ່ນເພື່ອຮັບໃຊ້ພາຍໃນຄອບຄົວເທົ່ານັ້ນ ບໍ່ມີການຂາຍອອກ ແລະ ລ້ຽງແບບປະຖິ້ມປະຖານໂດຍ ຊົມໃຊ້ພັນພື້ນເມືອງ.

ຕໍ່ມາໃນປີ 1996 ອົງການມິດຕະພາບເມັນໂນນາຍ ໄດ້ເຂົ້າໄປພັດທະນາບ້ານນາສາ ແລະ ໄດ້ ເນັ້ນໃສ່ການພັດທະນາແມ່ຍິງ ຈຶ່ງມີການຊຸກຍູ້ການປູກມອນລ້ຽງມ້ອນໂດຍໃຊ້ພັນປັບປຸງ ແລະ ຊຸກຍູ້ ເລື່ອງການຕະຫຼາດ. ຜ່ານມາຈົນຮອດປະຈຸບັນ ອົງການ ເມັນໂນນາຍ ຄິດວ່າ ກິດຈະກໍາດັ່ງກ່າວໄດ້ຮັບ ຄວາມສໍາເລັດທີ່ປະກົດເຫັນໄດ້ຄື: ເກີດຄອບຄົວຕົວແບບ ແລະ ການຫັນປ່ຽນໃນການປູກມອນລ້ຽງມ້ອນ ແບບພື້ນເມືອງມາລ້ຽງດ້ວຍວິທີການແບບໃຫມ່ ແລະ ນໍາໃຊ້ແນວພັນປັບປຸງ, ເຮັດໃຫ້ຊາວບ້ານເກີດ ຄວາມສົນໃຈລວມທັງພາກສ່ວນລັດຖະບານຕົ້ນຕໍ ແມ່ນອະນາໄມພັນແມ່ນຍິງເມືອງ.

ດັ່ງນັ້ນ, ອົງການ ມິດຕະພາບ ເມັນໂນນາຍ ຈຶ່ງໄດ້ເຮັດການວິໄຈນີ້ ເພື່ອໄຈ້ແຍກເງື່ອນໄຂ ແລະ ປັດໃຈຂອງຄວາມສໍາເລັດ ລວມທັງບັນຫາກ່ຽວກັບ ບົດບາດຂອງ ການປູກມອນລ້ຽງມ້ອນ, ລາຍໄດ້ຂອງ ແມ່ຍິງ ແລະ ຜົນກະທົບຢູ່ໃນຄອບຄົວ, ຊຸມຊົນຂອງເຂົາເຈົ້າ.ທີມງານວິໄຈ ມີຄວາມຫວັງວ່າເນື້ອໃນຂອງ ການວິໄຈນີ້ຈະສາມາດໃຊ້ເປັນແນວທາງໃນການຊຸກຍູ້ວຽກງານປູກມອນລ້ຽງມ້ອນໂດຍປະຊາຊົນ ຮ່ວມ ມືກັບອົງການພັດທະນາ ແລະ ລັດຖະບານໃນອານາຄົດ.

ຂອບເຂດຂອງການວິໄຈ

I ຊາວບ້ານ

1. ປະຫວັດຄວາມເປັນມາຂອງບ້ານນາສາ.

ປະຫວັດບ້ານ, ລະພາບເລດຖະກິດ-ສັງຄົມ(ແນວຄິດເລື້ອງຄວາມທຸກຈົນຂອງຊາວບ້ານ-ອາຊີບ ການຫາເມາຫາກິນ) , ການຊົມໃຊ້ສັບພະຍາກອນທໍາມະຊາດ, ຮີດຄອງປະເພນີ(ລະດັບຄອບຄົວ)

PDF created with pdfFactory Pro trial version www.pdffactory.com

2. **ສະພາບການປ່ຽນແປງແຕ່ລະໄລຍະ.**
   - ເລີ່ມຕັ້ງບ້ານ.
   - ໄລຍະສົງຄາມ.
   - ໄລຍະປະຈຸບັນ.
   - ການນຳໃຊ້ດິນນອບປາ.
   - ແຜນອາດບ້ານ.
3. **ສະພາບການປູກມອນລ້ຽງມ້ອນ.**

ວິທີການ, ຊະນິດພັນ, ລາຍໄດ້, ຂໍ້ສະດວກ, ຂໍ້ຫຍຸ້ງຫຍາກ(ແຕ່ກ່ອນ)
ບົດບາດຂອງແມ່ຍິງ ແລະ ແນວຄິດຂອງຜູ້ຊາຍກ່ຽວກັບການປູກມອນລ້ຽງມ້ອນ

II. MCC

ອົງການ ມິດຕະພາບ ເມັນໂນນາຍ ເລີ່ມເຂົ້າມາເຮັດວຽກຢູ່ ສປປ ລາວ ໃນປີ 1975 ໃນໄລຍະຕົ້ນ, ອົງການເມັນໂນນາຍ ໄດ້ປະຕິບັດ ໂຄງການເກັບກູ້ລະເບີດຢູ່ແຂວງຊຽງຂວາງ. ຕໍ່ມາໃນຊຸມປີ 1980 ອົງການໄດ້ຫັນມາໃຫ້ການຊຸກຍູ້ ໃນດ້ານວຽກງານສຶກສາ ແລະ ໄດ້ໃຫ້ການຊ່ວຍເຫຼືອ ແກ່ບັນດາໂຮງຮຽນ ກະເສດຊັ້ນຕົ້ນ ແລະ ໂຮງຮຽນສ້າງຄູຊັ້ນກາງຢູ່ 11 ແຂວງ. ນອກຈາກນັ້ນ, ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ອັນຈຳເປັນຂອງປະຊາຊົນ, ໃນຊຸມປີດັ່ງກ່າວ ອົງການຍັງໄດ້ສຸມໃສ່ວຽກງານໂຄງການດ້ານສາທາລະນະສຸກ, ກະສິກຳເຂດພູດອຍ ແລະ ສືບຕໍ່ໂຄງການປ້ອງກັນລະເບີດທີ່ບໍ່ທັນແຕກ.

ເລີ່ມແຕ່ປີ 1992 ເປັນຕົ້ນມາ ອົງການ ມິດຕະພາບ ເມັນໂນນາຍ ໄດ້ດຳເນີນໂຄງການ ຢູ່ເມືອງໃໝ່ ແຂວງຜົ້ງສາລີ ແລະ ເມືອງວຽງໄຊ ແຂວງຫົວພັນ. ຈຸດປະສົງ ແມ່ນເພື່ອເພີ້ມທະວີໃນການຄ້ຳປະກັນທາງດ້ານສະບຽງອາຫານ, ເພື່ອປັບປຸງການຮັກສາສຸຂະພາບຂັ້ນພື້ນຖານ ແລະ ການສຶກສາ. ນອກລະບົບ ແລະ ການລ້ຽງລາຍຮັບ.

ອົງການ ມິດຕະພາບ ເມັນໂນນາຍ ໄດ້ເຮັດວຽກ ພັດທະນາ ກຸ່ມຄົນທີ່ທຸກຈົນຢູ່ເຂດຊົນນະບົດແລະຍັງເອົາໃຈໃສ່ເລື່ອງບົດບາດຍິງ-ຊາຍທາງອົງການໄດ້ເລັ່ງໃສ່ການລ້ຽງຄວາມເຂັ້ມແຂງ ໃຫ້ກັບເອື້ອຍນ້ອງແມ່ຍິງຂັ້ນເມືອງ ແລະ ຂັ້ນບ້ານ, ພ້ອມກັນນັ້ນ ຍັງໄດ້ ພະຍາຍາມ ທີ່ຈະສ້າງເງື່ອນໄຂໃຫ້ເອື້ອຍນ້ອງແມ່ຍິງ ມີລາຍຮັບເພີ້ມເພື່ອຊ່ວຍໃຫ້ຊີວິດການເປັນຢູ່ຂອງຄອບຄົວເຂົາເຈົ້າດີຂຶ້ນ.ດັ່ງນັ້ນໂຄງການໄດ້ສຶກສາຄວາມເປັນໄປໄດ້ ຢູ່ບ້ານເປົ້າໝາຍ,ເຫັນວ່າ ປະຊາຊົນ ແຂວງ ຫົວພັນ ແລະ ຜົ້ງສາລີໂດຍສະເພາະ ແມ່ນເອື້ອຍນ້ອງແມ່ຍິງ, ເຂົາເຈົ້າມີຄວາມດຸໝັ່ນ ແລະ ມີມູນເຊື້ອໃນການຕ້ຳຫູກ ປູກມອນລ້ຽງມ້ອນ, ແຕ່ເຂົາເຈົ້າຍັງເຮັດແບບຫ້ຳມະຊາດ ລ້ຽງແບບພື້ນເມືອງ, ການຕ້ຳຫູກ, ການສັບສີ, ການຍ້ອມສີຍັງເຮັດແບບດັ່ງເດີມທີ່ເຄີຍເຮັດມາ ເຮັດໃຫ້ຜົນຜະລິດຕ່ຳ, ດັ່ງນັ້ນ

PDF created with pdfFactory Pro trial version www.pdffactory.com

ການປັບປຸງຄຸນນະພາບ ການປູກມອນລ້ຽງມ້ອນ ແລະ ການຕຳຫູກ ມັນແມ່ນຄວາມຈຳເປັນຂອງ ເຂົາເຈົ້າ. ສິ່ງສຳຄັນແມ່ນຂະເຈົ້າມີເນື້ອທີ່ດິນກ້ວາງຂວາງເພື່ອຈະຂະຫຍາຍສວນມອນໄດ້ອີກ ແລະ ເອື້ອຍນ້ອງແມ່ຍິງເອງກໍ່ມີຄວາມສົນໃຈທີ່ຢາກປັບປຸງ ການຜະລິດຂອງເຂົາເຈົ້າ ດັ່ງນັ້ນ ອົງການ ເມັນໂນນາຍ ຈຶ່ງໄດ້ຄັດເລືອກເອົາ ການປູກມອນລ້ຽງມ້ອນ ແລະ ຕຳຫູກ ເປັນກິດຈະກຳໜຶ່ງຂອງ ໂຄງການ, ເພື່ອສ້າງລາຍຮັບໃຫ້ກັບ ເອື້ອຍນ້ອງແມ່ຍິງ ແລະ ຄອບຄົວ.

ເລີ່ມປີ 1996 ອົງການ ມິດຕະພາບ ເມັນໂນນາຍ ໄດ້ເລີ່ມສົ່ງເສີມການປູກມອນລ້ຽງມ້ອນ ຢູ່ ບ້ານເປົ້າໝາຍຂອງໂຄງການ, ເອື້ອຍນ້ອງແມ່ຍິງ 2 ຄົນ, ຈາກບ້ານນາສາ ເມືອງວຽງໄຊ ໄດ້ເຂົ້າ ຮ່ວມການຝຶກອົບຮົມເລື່ອງການປູກມອນລ້ຽງມ້ອນ ເປັນເວລາ 1 ເດືອນ. ຫຼັງຈາກກັບເມືອທາງໂຄງ ການໄດ້ພົວພັນເອົາວິຊາການ ປູກມອນລ້ຽງມ້ອນ ໄປນຳພາເຮັດຄືຈິງໄປກັບບ້ານ. ພ້ອມກັນນັ້ນ ໂຄງການຍັງໄດ້ໃຫ້ທຶນໝູນວຽນ,ໜ່ວຍໝາກຈັບ ແລະ ເບ້ຍມອນພັນປັບປຸງ.ພ້ອມທັງໄດ້ຊຸກຍູ້ໃຫ້ ຂະເຈົ້າເຝິກອົບຮົມ ແລະ ຂະຫຍາຍການປູກມອນລ້ຽງມ້ອນໃຫ້ກັບຄອບຄົວອື່ນໆ.

ການປູກມອນລ້ຽງມ້ອນພັນປັບປຸງດ້ວຍວິທີການແບບໃໝ່ແມ່ນໄດ້ຮັບຜົນດີກ່ວາ ການລ້ຽງແບບພື້ນ ເມືອງ ແລະ ຊ່ວຍໃຫ້ຊີວິດການເປັນຢູ່ຂອງຊາວບ້ານດີຂຶ້ນ. ຊຶ່ງສະແດງອອກຄືດັ່ງລຸ່ມນີ້:

- ລາຍຮັບຈາກການປູກມອນລ້ຽງມ້ອນ ໄດ້ເພີ້ມຂຶ້ນເລື້ອຍໆ.ຄຸນນະພາບຂອງເສັ້ນໄໝດີຂຶ້ນກ່ວາ ເກົ່າ ແລະ ປະລິມານກໍ່ເພີ້ມຂຶ້ນ.
- ຄອບຄົວປ້າຄຳໃບ ແລະ ປ້າຈຸມທອງ ຢູ່ບ້ານນາສາ ໄດ້ກາຍເປັນຄອບຄົວຕົວແບບ.ສວນຂອງ ເຂົາເຈົ້າ ກາຍເປັນບ່ອນຝຶກອົບຮົມ ດ້ານການປູກມອນລ້ຽງມ້ອນ ແກ່ຄອບຄົວອື່ນ ພາຍໃນບ້ານ ແລະ ບ້ານໃກ້ຄຽງ.
- ພາຍໃນຄອບຄົວ. ມີສ່ວນຮ່ວມຫຼາຍຂຶ້ນ ຕົວຢ່າງ: ຜົວ ຊ່ວຍປຸກເຮືອນລ້ຽງມ້ອນ, ຂຸດໜານປັກ ຊ້ຳ,ຍ້ອມຮົ້ວສວນມອນ,ໄປເອົາໄຂ່ມ້ອນ ແລະ ຊ່ວຍວຽກເຮືອນ.ລູກຈະຊ່ວຍເກັບໃບມອນ,ເສຍ ຮັ້ມ້ອນ,ສາວຫຼອກ,ລ້ຽງໄໝ, ຕຳຫູກ ແລະ ເຮັດວຽກປະຈຳວັນພາຍໃນເຮືອນ. ຖືວ່າບັນດາວຽກ ຕ່າງໆແມ່ນຜົວ,ເມຍ ແລະ ລູກ ໄດ້ເຮັດຊ່ວຍກັນ ໂດຍບໍ່ຈຳແນກວ່າເປັນວຽກແມ່ຍິງຫຼືຜູ້ຊາຍ
- ແມ່ຍິງໄດ້ອອກສູ່ສັງຄົມພາຍນອກຫຼາຍຂຶ້ນເຊັ່ນ: ໄດ້ເຂົ້າຮ່ວມກອງປະຊຸມ,ເຝິກອົບຮົມ,ສຳມະ ນາ,ທັດສະນະສຶກສາ, ໄດ້ເປັນຜູ້ຮັບຜິດຊອບກິດຈະກຳຕ່າງໆ.

ຂໍ້ສະດວກ:

- ສະຫະພັນແມ່ຍິງເມືອງວຽງໄຊໄດ້ແຕ່ງຕັ້ງຜູ້ປະສານງານ 1 ຄົນມາເຮັດວຽກເຕັ້ມເວລາຮ່ວມກັບອົງ ການເມັນໂນນາຍ.

PDF created with pdfFactory Pro trial version www.pdffactory.com

- ຜູ້ປະສານງານ ຈາກສະຫະພັນເມືອງເປັນຜູ້ປະຕິບັດກິດຈະກຳໂດຍກົງ ຮ່ວມກັບ ສະຫະພັນແມ່ຍິງ ບ້ານ
- ຊາວບ້ານເຄີຍມີປະສົບການປູກມອນລ້ຽງມ້ອນແບບພື້ນເມືອງມາກ່ອນແລ້ວ,ເວລາປັບປຸງສິ່ງເສີມ ເຮັດໃຫ້ເຂົາເຈົ້າເຂົ້າໃຈງ່າຍ ແລະ ກິດຈະກຳໄດ້ຮັບຜົນດີ.

<u>ຂໍ້ຫຍຸ້ງຫຍາກ:</u>

- ໂຄງການປູກມອນລ້ຽງມ້ອນພັນປັບປຸງ ຈະໄດ້ຜົນດີກວ່າລ້ຽງແບບພື້ນເມືອງປະມານ 3 ເທົ່າ, ແຕ່ ຖ້າໃຊ້ພັນປັບປຸງລ້ຽງມ້ອນພື້ນເມືອງກໍໄດ້ຜົນດີກ່ວາ ລ້ຽງແບບພື້ນເມືອງ.
- ເສັ້ນໄໝ ທີ່ຜະລິດໄດ້ຈະບໍ່ມີບັນຫາເລື່ອງການຕະຫຼາດ,ສາມາດຂາຍໄດ້ຢູ່ກັບບ້ານ ຫຼືຕະຫຼາດ ທ້ອງຖິ່ນ.
- ຜະລິດຕະພັນທີ່ຕຳຈາກໄໝເຊັ່ນ: ຜ້າແພ ແລະອື່ນໆ ຍັງຂາຍຍາກສຳລັບເຂດທີ່ຢູ່ຫ່າງໄກສອກ ຫຼີກເສັ້ນທາງຄົມມະນາຄົມບໍ່ສະດວກ, ເພາະຊາວບ້ານຍັງບໍ່ທັນເຂົ້າເຖິງຕະຫຼາດໄດ້.
- ສິ່ງເສີມກິດຈະກຳປູກມອນລ້ຽງມ້ອນ ແລະ ຕຳໝາກໃນບ້ານຂອງຊົນເຜົ່າລາວລຸ່ມຈະໄດ້ຮັບຜົນດ ກ່ວາເພາະເຂົາເຈົ້າເຄີຍມີປະສົບການການປູກແບບພື້ນເມືອງມາແລ້ວ.
- ການປູກມອນລ້ຽງມ້ອນ ແລະ ການຕຳໝາກຄວນເຮັດໄປຄຽງຄູ່ກັນ,ຍ້ອນວ່າ ຖ້າຂາຍຜະລິດຕະພັນ ທີ່ຕຳດ້ວຍເສັ້ນໄໝຈະສ້າງລາຍຮັບສູງກ່ວາຂາຍເສັ້ນໄໝ.

III. <u>ລັດຖະບານ</u>

- ພາກສ່ວນທີ່ຮ່ວມງານ
- ນະໂຍບາຍຂອງ ສະຫະພັນແມ່ຍິງກ່ຽວກັບ ການຫາລາຍໄດ້ຂອງແມ່ຍິງ
- ແນວຄິດຂອງພະນັກງານລັດ(ພາກສ່ວນທີ່ຮ່ວມງານ)
- ທິດທາງໃນຕໍ່ໜ້າໃນການຊຸກຍູ້ຂອງສະຫະພັນແມ່ຍິງເມືອງຫຼືແຂວງ

IV <u>ສະຫຼຸບ ແລະ ວິເຄາະ</u>

ການປູກມອນລ້ຽງມ້ອນ ແລະ ຕຳໝາກ ເປັນໂຄງການທີ່ໄດ້ຍົກສູງຖານະບົດບາດຂອງແມ່ຍິງໃນຫຼາຍ ດ້ານເຊັ່ນ: ການສ້າງລາຍຮັບເພີ່ມໃຫ້ແກ່ຄອບຄົວ, ເພີ່ມຄວາມຮູ້ຄວາມສາມາດໃຫ້ແກ່ແມ່ຍິງ ແລະ ນອກຈາກນັ້ນຍັງເຮັດໃຫ້ມີການປ່ຽນແປງດ້ານບົດບາດຍິງ-ຊາຍໃນຄອບຄົວ ໃນຊຸມຊົນ ແລະໃນສັງ ຄົມ. ຕົວຢ່າງ: ໃນປີ 2001 ບ້ານນາໆ 5 ຄອບຄົວ ມີລາຍຮັບຈາກການຂາຍເບ້ຍມອນ, ຂາຍເສັ້ນ ໄໝ ແລະ ຂາຍຜ້າແພຕຳຈາກໄໝ ໄດ້ເຖິງ 22.000 ກີບ ສະເພາະຄອບຄົວ ປ້າລຸ່ນທອງໄດ້ 5.200.000 ກີບ(ເວລາລົງບ້ານຈະເອົາຂໍ້ມູນເພີ່ມ).ນອກຈາກນັ້ນຄອບຄົວຕົວແບບຍັງໄດ້ຂະ ຫຍາຍຄວາມຮູ້ດ້ານວິທີການ ປູກມອນລ້ຽງມ້ອນແບບໃໝ່ໃຫ້ກັບຄອບຄົວອື່ນໆພາຍໃນບ້ານແລະ

PDF created with pdfFactory Pro trial version www.pdffactory.com

ບ້ານໄກ້ຄຽງ, ໃນປີ 1996 ມີ 2 ຄອບຄົວ ທີ່ປູກມອນພັນປັບປຸງ ມາເຖິງປັດຈຸບັນ ມີທັງໝົດ.....
.....ຄອບຄົວ,ສະຫະພັນແມ່ຍິງເມືອງວຽງໄຊກໍ່ໄດ້ຈັດຕັ້ງເອົາຊາວບ້ານເຊິ່ງບໍ່ແມ່ນບ້ານເປົ້າໝາຍ ຂອງໂຄງການໄປທັດສະນະສຶກສາ ແລະ ຝຶກອົບຮົມຢູ່ບ້ານນາສາ.
ຢູ່ໃນລະດັບຄອບຄົວ:ທຸກຄົນພາຍໃນຄອບຄົວໄດ້ຊ່ວຍກັນເຮັດວຽກປະຈຳວັນໂດຍບໍ່ໄດ້ຈຳແນກວ່າ ແມ່ນວຽກແມ່ຍິງຫຼືວຽກຜູ້ຊາຍ. ໃນຊຸມຊົນແມ່ຍິງໄດ້ເຂົ້າຮ່ວມໃນຂະບວນການຕັດສິນໃຈຕ່າງໆ ໂດຍສະເຈ້ຍໄດ້ເຂົ້າຮ່ວມເປັນຂະບວນພັດທະນາບ້ານ ຫຼື ຜູ້ຮັບຜິດຊອບກິດຈະກຳຕ່າງໆ,ແມ່ຍິງມີໂອ ກາດໄດ້ເຂົ້າຮ່ວມກອງປະຊຸມ, ຝຶກອົບຮົມ,ທັດສະນະສຶກສາຕາມຄວາມເໝາະສົມ ແລະຜູ້ຊາຍ ແລະ ສັງຄົມຮັບຮູ້ບົດບາດຂອງແມ່ຍິງຫຼາຍຂຶ້ນ.

ອີງການ ມິດຕະພາບ ເມັນໂນນາຍ ເຫັນວ່າໂຄງການ ປູກມອນລ້ຽງມ້ອນ ແລະ ຄ້ຳຫູກ ໄດ້ສ້າງລາຍ ຮັບເພີ່ມໃຫ້ກັບຊາວບ້ານ ແລະ ດຳເນີນໄປໄດ້ດີໃນປັດຈຸບັນ, ແຕ່ວ່າໃນອານາຄົດ ເພື່ອຮອງຮັບ ດ້ານການຕະຫຼາດ ແລະ ເພື່ອເຮັດໃຫ້ລາຍຮັບຂອງຊາວບ້ານເພີ່ມຂຶ້ນຫຼາຍກ່ວາເກົ່າ, ຊາວບ້ານ ຄວນຈະເຮັດເປັນຜະລິດຕະພັນສຳເລັດຮູບເພື່ອຂາຍ ຕົວຢ່າງ:ນຳເອົາຜ້າແຜທີ່ຕຳຈາກຝ້າຍ,ໄໝມາ ຜະລິດເປັນເສື້ອ,ກະເປົ໋າຫຼືອື່ນໆ. ນອກຈາກນັ້ນ ຕົ້ນມອນ ແລະ ໃບມອນຄວນແປຮູບເຊັ່ນ: ການ ເຮັດຊາໃບມອນ ແລະ ອື່ນໆ ອີງຕາມຄວາມຕ້ອງການຂອງຜູ້ຊົມໃຊ້.

- ການປະກອບສ່ວນຄວາມຄິດເຫັນຕໍ່ຜູ້ກ່ຽວນີ້ສຶກສາ

. <u>ໂຄງການວິໄຈຫວນຄືນ 10 ປີ ວຽກງານພັດທະນາ</u>

I ການເພີ້ມລາຍໄດ້ແລະເພີ້ນທ່າແຮງຂອງຊຸມຊົນ

1.1 ບົດບາດຂອງການປູກມອນລ້ຽງມ້ອນໃນການເພີ້ມລາຍໄດ້ ແລະ ຊຸກຍູ້ບົດບາດແມ່ຍິງ : ໃນກໍ ລະນີສຶກສາບ້ານນາສາ ເມືອງວຽງໄຊ ແຂວງຫົວພັນ.

<u>ຂໍ້ສັງເກດ:</u> 1. ໃຫ້ມີຂໍ້ມູນທາງດ້ານສະຖິຕິຫຼາຍຂຶ້ນ
2. ໃຫ້ມີຂໍ້ມູນດ້ານການຕະຫຼາດຫຼາຍຂຶ້ນ(ວິທີຊອກຕະຫຼາດ,ລາຄາຂາຍ)
3. ຂໍ້ຮູບໝາຍ
4. ອີງປະກອບການປູກມອນລ້ຽງມ້ອນ
- ຕ້ອງມີດິນ, ເບ້ຍປູກ,ຕະຫຼາດ, ວິຊາການ
- ຕາມແນວຄິດຊາວບ້ານ
- ຕາມແນວຄິດ MCC

- ເລື້ອງການຕະຫຼາດມີການກ້າວໜ້າເປັນເງື່ອນໄຂສຳຄັນທີ່ຈະເຮັດໃຫ້ວຽກຄົວນີ້ສືບຕໍ່ໄດ້.

PDF created with pdfFactory Pro trial version www.pdffactory.com

❖ <u>ຂໍ້ສະເໜີເພີ່ມເຕີມ</u>

- ໃຫ້ສຶກສາ ສ/ກ ຄ/ຄ ກ່ອນ ແລະ ຫຼັງໂຄງການ MCC
- ສຶກສາປ່ຽນພາບການເຮັດໄຮ່ເຮັດນາກ່ອນແລະຫຼັງໂຄງການ
- ໃຫ້ໄຈ້ແຍກບັນຫາດ້ານການຕະຫຼາດ ວິຖີຈອບການລ້ຽງຫົ່ນ ແລະ ລາຍໄດ້
- ໃຫ້ສຶກສາຄວາມເຂົ້າໃຈກ່ຽວກັບຄວາມສຳຄັນຂອງການປູກມອບລ້ຽງມ້ອນລະຫວ່າງ MCC ກັບຊາວບ້ານວ່າຄືກັນ ແລະຕ່າງກັນຕື່ແນວໃດ.
- ການວິໄຈນີ້ອາດເຮັດໃຫ້ເຫັນກ່ຽວກັບການຄ້າໃນລະດັບໂລກໄດ້
- ການວິໄຈຄວນຈະມີ ຈຸດສຶກສາຄວາມໝາຍຄວາມສຳຄັນຂອງການປູກມອບລ້ຽງມ້ອນໃນເລື່ອງ ຮີດຄອງປະເພນີ ແລະ ລຶດທິຊຸມຊົນນຳ
- ໃຫ້ສຳລວມຂໍ້ມູນກ່ຽວກັບລາຍໄດ້ຂອງຄອບຄົວ ໃຫ້ຮູ້ວ່າປະຊາຊົນນຳໃຊ້ລາຍໄດ້ທີ່ໄດ້ຮັບ ຈາກການປູກມອບລ້ຽງມ້ອນໃນໂຄງການແນວໃດ? ການກິນຢູ່ດີຂຶ້ນຫຼືບໍ່ ?
- ໃຫ້ສະແດງໃຫ້ເຫັນບົດບາດຂອງຜູ້ຍິງຢ່າງຈະແຈ້ງເຊັ່ນ: ໃນກອງປະຊຸມ ບ້ານຮ່ວມກັບຜູ້ຊາຍ ແມ່ຍິງມີບົດບາດຫຼາຍຂຶ້ນ.
- ເຮົາຈະເອົາອັນໃດເປັນໂຕຊີ້ວັດ (Indicator)
- ອາດເປັນໄປໄດ້ວ່າການມີສ່ວນຮ່ວມຫຼາຍຂຶ້ນຂອງຜູ້ຊາຍ. ເກັບຈາກສາຍເຫດອື່ນ ບໍ່ແມ່ນພຽງ ແຕ່ຈາກໂຄງການເທົ່ານັ້ນ.

PDF created with pdfFactory Pro trial version www.pdffactory.com

ໂຄງການວິໄຈທ່ວນຄົ້ນ 10 ປີ ວຽກງານພັດທະນາຢູ່ລາວ

ຫົວຂໍ້ທີ 1 : ການເພີ່ມລາຍໄດ້-ແລະ ການເພີ່ມທ່າແຮງຂອງຊຸມຊົນ ຈາກການປູກມອນລ້ຽງມ້ອນ.

ຫົວຂໍ້ທີ 1.2 : ວິຈາຈອນລາຍໄດ້ຈາກສວນມ້ອນຊີວະພາບ ແລະ ຈາກການທ່ອງທ່ຽວ ແລະ ຄວາມສຳພັນກັບຊຸມຊົນ : ກໍລະນີສຶກສາຈາກສວນມ້ອນ ພູດິນແດງ ເມືອງ ວັງວຽງ ແຂວງ ວຽງຈັນ.

ຄວາມເປັນມາ ແລ່ະ ແນວຄິດຂອງການວິໄຈ.

ສວນມ້ອນພູດິນແດງ ແມ່ນສວນຊີວະພາບ ຂອງທ່ານ ທະນົງສີ ໄຊລາໆກຸນ ທ່ານ ທະນົງສີ ແມ່ນເປັນຜູ້ທີ່ມີແນວຄິດ ໃນການອະນຸລັກສວນມ້ອນຂອງເພີ່ນ ນອກຈາກຈະເປັນການຊຸກຍູ້ເສດຖະກິດຂອງຄອບຄົວເພີ່ນເອງແລ້ວ ຍັງເປັນການເຮັດວຽກ ເພື່ອຕອບສະໜອງແນວຄິດໃນການອະນຸລັກຮັບໜະຍາກອນທຳ່ມະຊາດ ແລະ ການຊຸກຍູ້ທ່າແຮງຂອງປະຊາຊົນທ້ອງຖິ່ນ ຢູ່ໃນບ້ານພູດິນແດງ ແລະ ບ້ານອ້ອມແອ້ມຂອງເພີ່ນອີກດ້ວຍ.

ນັບຕັ້ງແຕ່ ທ່ານ ທະນົງສີ ຍ້າຍກັບມາບ້ານເກີດ ຄືເມືອງວັງວຽງ ໃນປີ 1996 ເພີ່ນໄດ້ເລີ່ມສ້າງກິດຈະການ ແລະ ກິດຈະການກ່ຽວກັບການປູກມອນລ້ຽງມ້ອນແບບຊີວະພາບດ້ວຍຕົນເອງ ແລະ ຕໍ່ມາວຽກງານນີ້ ໄດ້ຂັ້ນຂະຫຍາຍໄປສູ່ປະຊາຊົນ ບ້ານພູດິນແດງ ແລະ ບ້ານອ້ອມແອ້ມ ປະຊາຊົນ ຈຳນວນ 30-50 ຄົນ ໄດ້ຮັບລາຍໄດ້ຈາກການປູກ ແລະ ເກັບໃບມອນ ຍາມວ່າງຈາກການຕ່ຳໝາກ ແລະການເຮັດຊາຊຽວຊີວະພາບເປັນຕົ້ນຕໍ ນອກຈາກນັ້ນ ຍັງມີບ້ານອ້ອມແອ້ມອື່ນໆ ທີ່ໄດ້ຮັບປະໂຫຍດຈາກການເຂົ້າມາຂອງສວນມ້ອນ ພູດິນແດງ ເຊັ່ນໄດ້ໂອກາດ ຕໍ່ມາວຽກງານຂອງສວນຊີວະພາບພູດິນແດງ ເກີດການຂະຫຍາຍຕົວ ໄປກ່ຽວຂ້ອງກັບການທ່ອງທ່ຽວ ແລະ ແນວຄິດການທ່ອງທ່ຽວແບບ ນິເວດ (Eco tourism) ເຊິ່ງກໍ່ເຮັດໃຫ້ໄດ້ຮັບລາຍໄດ້ ແລະ ໄດ້ປະກອບກິດຈະກຳຂຶ້ນອີກຫຼາຍຕື່ມ.

ການວິໄຈນີ້ ມີຈຸດປະສົງທີ່ຈະໄຈ້ແຍກໃຫ້ເຫັນແນວຄິດຂະບວນການ ຂັ້ນຕອນຂອງການລິເລີ່ມ ກິດຈະການ ການພັດທະນາ ແລະ ບັນຫາຂອງກິດຈະການ ແລະ ແນວຄິດຂອງສວນມ້ອນ ພູດິນແດງ ໂດຍສະເພາະທີ່ກ່ຽວຂ້ອງກັບການສົ່ງເສີມປະຊາຊົນອ້ອມຂ້າງ ແລະ ແນວຄິດທີ່ກ່ຽວຂ້ອງກັບການສຶກສາທຳ ທຳ່ມະຊາດ ແລະ ການທ່ອງທ່ຽວແບບນິເວດ ເພື່ອໃຫ້ເປັນສ່ວນປະກອບໃນການວິໄຈກ່ຽວກັບປະໂຫຍດ ຂອ່ງການປູກມອນ ລ້ຽງມ້ອນອື່ນໆຕໍ່ໄປ.

PDF created with pdfFactory Pro trial version www.pdffactory.com

ຂອບເຂດການວິໄຈ :

1. **ແນວຄິດ ແລະ ຂັ້ນຕອນການກໍ່ຕັ້ງສວນມ້ອນ ພູດິນແດງ.**
   - ກິດຈະກຳໃນແຕ່ລະໄລຍະ.
   - ວົງຈອນຂອງລາຍໄດ້ ແລະ ລາຍຍ່າຍ.
   - ພັດທະນາການຂອງການເຄົ້າປະຊາຊົນເຂົ້າຮ່ວມ.
   - ການເລີ່ມຕົ້ນ ການກ່ຽວຂ້ອງກັບການທ່ອງທ່ຽວ.
   - ບັນຫາອຸປະສັກ.
2. **ບ້ານ ພູດິນແດງ.**

   ສະພາບບ້ານ
   - ລາຍເຫດຂອງການເຂົ້າຮ່ວມໃນວຽກງານຂອງສວນມ້ອນ.
   - ກຸ່ມຜູ້ເຂົ້າຮ່ວມ
   - ລາຍໄດ້ໃນລ່ະດັບບຸກຄົນ.
3. **ບ້ານອື່ນໆ**
   - ຄວາມເຂົ້າໃຈກ່ຽວກັບແນວຄິດ ແລະ ວຽກງານຂອງສວນມ້ອນ ພູດິນແດງ.
   - ປະໂຫຍດທີ່ໄດ້ຮັບ.
   - ແນວຄິດຂອງຜູ້ກ່ຽວຂ້ອງ.
4. **ກິດຈະກຳກ່ຽວກັບການທ່ອງທ່ຽວ.**
   - ກິດຈະກຳອາລາລະໜັກ.
   - ເຮືອນພັກ ແລະຮ້ານອາຫານ.
   - ຄວາມຄິດເຫັນຂອງຜູ້ເຂົ້າຮ່ວມ.
1. **ບົດລະສຸບວິເຄາະ.**
   - ເງື່ອນໄຂຄວາມສຳເລັດຂອງ ສວນມ້ອນພູດິນແດງ.
   - ບັນຫາອຸປະສັກ
   - ຄວາມກ່ຽວຂ້ອງກັບຊຸມຊົນ.
   - ຄວາມກ່ຽວຂ້ອງກັບພາກສ່ວນອື່ນໆ (ນັກທ່ອງທ່ຽວ, ເມືອງ)

ໂຄງການວິໄຈຫວນຄືນ 10 ປີ ວຽກງານພັດທະນາຢູ່ລາວ

I. ການເພີ່ມລາຍໄດ້ ແລະ ການເພີ່ມທ່າແຮງ ຂອງຊຸມຊົນຈາກການປູກສວນລັ່ງມ້ອນ.

I.2 ວົງຈອນລາຍໄດ້ ຈາກສວນມ້ອນຊ້ອຍພາບ ແລະ ຈາກການທ່ອງທ່ຽວ ແລະ ຄວາມສຳພັນກັບຊຸມຊົນ : ກໍລະນີ ສຶກສາຈາກສວນມ້ອນ ພູດິນແດງ ເມືອງ ວັງວຽງ ແຂວງວຽງຈັນ.

PDF created with pdfFactory Pro trial version www.pdffactory.com

ຄວາມເປັນມາ ແລະ ແນວຄິດຂອງການວິໄຈ.

ສວນມ່ອນ ພູດິນແດງ ແມ່ນສວນມ່ອນຊີວະພາບຂອງທ່ານ ທະນົງສີ ໂສລາງມູນ .

ທ່ານ ທະນົງສີ ໄດ້ເລີ່ມເຮັດສວນມ່ອນຊີວະພາບ ໃນປີ 1996 ເປັນຕົ້ນມາ, ທ່ານເປັນຜູ້ທີ່ມີແນວຄິດ ໃນການອານຸລັກ ຮັກສາ ສວນມ່ອນຂອງເພິ່ນ ດ້ວຍການເອົາໃຈໃສ່ ແລະ ເປັ່ງແຍງເປັນຢ່າງດີ, ນອກຈາກຈະຮູ້ກຸ້ເສດຖະກິດຂອງຄອບຄົວເພິ່ນແລ້ວ ຍັງແມ່ນການເຮັດວຽກ ເພື່ອຕອບສະໜອງແນວຄິດ ໃນການອະນຸລັກຮັກສາຊັບພະຍາກອນທຳມະຊາດ ແລະ ເປັນການຮຽກຮູ້ທ່າແຮງຂອງປະຊາຊົນຕາມທ້ອງຖິ່ນນັ້ນ ຢູ່ໃນບ້ານ ພູດິນແດງ ແລະ ບ້ານອ້ອມແອ້ມຂອງເພິ່ນອີກດ້ວຍ.

ນັບແຕ່ງແຕ່ ທ່ານ ທະນົງສີ ກວນກັບມາສູ່ບ້ານເກີດຂອງເພິ່ນອີກເທື່ອໜຶ່ງ ກໍຄື ເມືອງຈັງວຽງ ໃນ ປີ 1996 ແລະ ເພິ່ນໄດ້ເລີ່ມສ້າງກິດຈະການ ແລະ ກິດຈະການກ່ຽວກັບ ການປູກມ່ອນ ລ້ຽງມ້ອນແບບຊີ ວະພາບ ດ້ວຍຕົວເພິ່ນເອງ ແລະ ຕໍ່ມາວຽກງານນີ້ໄດ້ຂັນຂະຫຍາຍໄປສູ່ປະຊາຊົນ ເຮັດໃຫ້ປະຊາຊົນ ບ້ານພູດິນແດງ ມີການເຂົ້າຮ່ວມເຖິງ 30-50 ຄົນ ໃນປັດຈຸບັນ ແລະ ໄດ້ຮັບລາຍໄດ້ຈາກການປູກມ່ອນ ແລະ ເກັບໃບມ່ອນ, ຈາກການຕຳໜູກ ແລະ ການເຮັດຊາສ້ວຍໃບມ່ອນ ຊີວະພາບເປັນຕົ້ນຕໍ ນອກຈາກນີ້ ຍັງມີບ້ານອ້ອມແອ້ມອື່ນໆ ທີ່ໄດ້ຮັບຜົນປໂຫຍດຈາກການເຂົ້າມາຂອງສວນມ່ອນ ພູດິນແດງ, ເຊັ່ນ : ໄດ້ ສ້າງໂຮງຊຽມ. ຕໍ່ມາວຽກງານຂອງສວນມ່ອນ ຊີວະພາບ ຂອງບ້ານ ພູດິນແດງເກີດມີການຂະຫຍາຍຕົວ ໄປກ່ຽວຂ້ອງກັບການທ່ອງທ່ຽວແລະແນວຄິດການທ່ອງທ່ຽວແບບນິເວດ (Ecotourism) ເຊິ່ງກໍ່ເຮັດໃຫ້ ໄດ້ລາຍຮັບ ແລະ ໄດ້ປະກອບກິດຈະກຳຂຶ້ນອີກຕື່ມ.

ການວິໄຈນີ້ ມີຈຸດປະສົງທີ່ຈະໄຈ້ແຍກ ໃຫ້ເຫັນແນວຄິດ ຂະບວນການຂັ້ນຕອນຂອງການລິເລີ່ມ ກິດຈະການ ການພັດທະນາ ແລະ ບັນຫາຂອງກິດຈະການ ແລະ ແນວຄິດຂອງສວນມ່ອນ ພູດິນແດງ ໂດຍສະເພາະທີ່ກ່ຽວຂ້ອງກັບການສົ່ງເສີມໃຫ້ປະຊາຊົນອ້ອມຂ້າງ ແລະ ແນວຄິດທີ່ກ່ຽວຂ້ອງກັບການສົ່ງ ເສີມ ໃຫ້ປະຊາຊົນອ້ອມຂ້າງ ແລະ ແນວຄິດທີ່ກ່ຽວຂ້ອງກັບ ການຮັກສາທຳທຳມະຊາດ ແລະ ການທ່ອງທ່ຽວ ແບບນິເວດ ເພື່ອໃຫ້ເປັນສ່ວນປະກອບໃນການວິໃຈກ່ຽວກັບປະໂຫຍດຂອງການປູກມ່ອນລ້ຽງມ້ອນ ອື່ນໆຕໍ່ໄປອີກດ້ວຍ.

1 / ແນວຄິດ ແລະ ຂັ້ນຕອນການກໍ່ຕັ້ງສວນມ່ອນ ພູດິນແດງ.

ແມ່ນເພິ່ນ ມີຄວາມຄິດຮອດຄິດເຖິງບ້ານ ແລະ ຊີວິດຂອງຊາວໄຮ່ຊາວສວນ, ຈຶ່ງເປັນແຮງບັນ ດານໃຈໃຫ້ເພິ່ນກັບມາເມືອງຈັງວຽງ ໃນປີ 1996. ໃນເບື້ອງຕົ້ນ ເພິ່ນໄດ້ລ້ຽງຄອບຄົວນ້ອຍໆ ຢູ່ຕາມ ແຄມແມ່ນ້ຳຊອງ ດ້ວຍຕົວຂອງເພິ່ນພຽງຄົນດຽວ. ແລະ ຍ້ອນຄວາມຕັ້ງໃຈ ແລະ ຮັກທຳມະຊາດຂອງ ທ່ານ, ຈຶ່ງເຮັດໃຫ້ເພິ່ນ ເກີດຄວາມຄິດໃນການລິເລີ່ມຂຶ້ນ ໃນການເຮັດສວນມ່ອນຊີວະພາບ ທີ່ຢູ່ຕາມທຳ ມະຊາດ ແລະ ເພື່ອສຶກສາຄວາມຮູ້ຈາກທຳມະຊາດ ເພື່ອທີ່ຈະເອົາມາໃຊ້ເຂົ້າໃນການເຮັດວຽກຂອງ ເພິ່ນ.

PDF created with pdfFactory Pro trial version www.pdffactory.com

ກິດຈະກຳແຕ່ລະໄລຍະ :

ໄລຍະ ເວລາ	ຊາໃນນອນ	ປູກນອນລ້ຽງມ້ອນ	ກິດຈະການ		ອາສາສະໝັກ
			ຮ້ານອາຫານ	ເຮືອນພັກ	ແລະ ປະຊາຊົນ
1996	-	-	-	-	ມີຢູ່ 4 ຄົນ : - ຂະມຸ, - ນ້ຳ - ໄຫບ້ານ ລວມທັງທ່ານທະນົງສັ
1997	-	ເລີ່ມສ້ຽງສວນນອນ ໃນເບື້ອງຕົ້ນມີຕົ້ນ ປູກໝູ່ 1 ເຮັກຕາ	ແນ່ນອ້ງແນ່ນ ຄອບຄົວ	ຢູ່ແນ່ນ ຄອບຄົວ	ເລີ່ມມີອາສາສະໝັກ ແລະປະຊາຊົນເຂົ້າ ຮ່ວມໃນການເຮັດ ສວນນອນ
1998	-	ໄດ້ຮັບຜົນດີ ເຊັ່ນ:ການເຮັດໄໝ ມ້ອນຫ້ານະຊາດຕ່ຳ ເປັນແຕ່ນແຍ	ສ້ຽງລ້ຽງໄດ້ໃຫ້ ຄອບຄົວເປັນຢ່າງດີ	ມີຕົ້ນຕ່ຳ ປະເທດແລະ ນັກທ່ອງທ່ຽວ ມາພັກ	ສ້ຽງລ້ຽງໄດ້ໃຫ້ປະຊາ ຊົນແລະເຮັດໃຫ້ປະຊາ ຊົນ ມີວຽກເຮັດງານທ ຳ
1999	ຊາຂຽວໃນນອນໄດ້ ຖືກລາງສະແດງໃນ ບຸນໜ່ວຍທາດຫຼວງ	ຜະລິດໄໝໄດ້ຕົ້ງທ ຳ ອິດແມ່ນ300 kg 1 kg ຕໍ່ 90.000 k	- " -	- " -	
2000	ຊາຂຽວໃນນອນຜະ ລິດໄດ້ 200 kg	ສືບຕໍ່ການປູກນອນ ລ້ຽງມ້ອນ	ເພີ່ນໄດ້ໄປຂະ ຫຍາຍຮ້ານອາຫານ ໃຫ້ລູກສ ້ອງຢູ່ຕົວ ເມືອງ	- " -	ມີປະຊາຊົນເຂົ້າຮ່ວມ ກິດຈະກ ຳຕ່າງໆ
2001	ຜະລິດຊາຂຽວໃ ນນອນໄດ້ 200 kg	- " -	- " -	- " -	- " -
2002	ຜະລິດໄດ້ຊາຂຽວ ໃນນອນໄດ້ 200 kg	- " -	- " -	- " -	ປະຈຸບັນນີ້ ອາສາສະ ໝັກມີຊາວຕ່າງປະເທດ ມີເຖິງ12 ຄົນ

PDF created with pdfFactory Pro trial version www.pdffactory.com

2./ <u>ວິຈອນລາຍໄດ້ ແລະ ລາຍຈ່າຍ.</u>

ແມ່ນໄດ້ລ້ຽງໃຫ້ ເລດຖະກິດຄອບຄົວ ຂອງທ່ານ ທະນົງສີ ມີຄວາມອຸດົມສົມບູນ ໃນດ້ານການຂະ ຫຍາຍເລດຖະກິດຄອບຄົວ, ວິຈອນລາຍຮັບ ແລະ ລາຍຈ່າຍ ແມ່ນໄດ້ລະບຸແຈ້ງຕາມຕາຕະລາງລຸ່ມນີ້

ໄລຍະ	ຂຸາໃນນອນ	ໄໝ + ງົ້ງນ້ອນ	ຮ້ານອາຫານ ເຮືອນພັກ	ປະຊາຊົນ
1996	ຍັງບໍ່ທັນມີ	ຍັງບໍ່ທັນມີ	ຍັງບໍ່ທັນມີ	ຍັງບໍ່ມີສ່ວນຮ່ວມ
1997	ເລີ່ມລ້ຽງຂອນນອນ	ເລີ່ມປູກນອນງົ້ງນ້ອນ	- " -	ມີປະຊາຊົນເຂົ້າ ຮ່ວມ3ຄົນ
1998	ຍັງບໍ່ທັນມີເທື່ອ	ຜະລິດໄໝນ້ອນໄດ້ 72 kg/ປີ 1kg=90.000	ໃນເບື້ອງຕົ້ນເປັນພຽງ ເຮືອນຫ້ານະດາ, ທີ່ ເຮັດອາຫານໃຫ້ນວກ ອາຍາຂະໜັກ	ໄດ້ເຂົ້າມາເຮັດວຽກໃນ ຂອນນອນແລະມີລາຍ ຮັບ 1ມື້/ 15.000 ກີບ ໂດຍສະເລ່ຍ
1999	ຜະລິດຂຸາຂຽວໃນນອນຄົ້ງ ທຳອິດໄດ້ ເຖິງ 300 kg	ໄດ້ຫ່ເປັນແຜ່ນແລ້ວເອົາ ໄປຕັດເປັນຊຸດແລ້ວສິ່ງ ຂາຍໃຫ້ຍີ່ປຸ່ນໄດ້ເຖິງ 300$/ຊຸດ	ແມ່ນເອົາຕົ້ນລະປູກ ມາເຮັດເປັນອາຫານ ໃຫ້ນັກທ່ອງທ່ຽວເຊັ່ນ : ຕົ້ມປອດສານໝິດ, ໃນ ນອນຊຸບແປ້ງ....ເຮັດ ເຮືອນພັກ 1ຫຼັນ/200B	ໄດ້ຈ່າຍຄ່າແຮງງານ ໃຫ້ປະຊາຊົນ ເຮັດຂຸາ 20.000k/ມື້ ເຮັດໄໝ 15.000k/ມື້ ລ້ຽງນ້ອນ15.000k/ມື້
2000	ລາຍໄດ້ຂອງຂຸາຂຽວໃນ ນອນ 200kg x 500B 100.000B/ປີ	ຜະລິດໄດ້ 34 ກິໂລ/ປີ ສະເລ່ຍເປັນເງິນໄດ້ 3.060.000k/ປີ	ໄດ້ເພີ່ມລາຍໄດ້ໃຫ້ ເລດຖະກິດຄອບຄົວດີ ຂຶ້ນເປັນກ້າວໆ	- " -
	- " -	ຜະລິດໄດ້ 40 ກິໂລ/ປີ ສະເລ່ຍເປັນເງິນໄດ້ 3.600.000k/ປີ	- " -	- " -
	- " -	ຫາກໍ່ຜະລິດໄດ້ຄັ້ງທຳ ປະມານ 8 ກິໂລ	- " -	- " -

PDF created with pdfFactory Pro trial version www.pdffactory.com

3./ ພັດທະນາການຂອງການເອົາປະຊາຊົນມີສ່ວນຮ່ວມ.

ແມ່ນໄດ້ສ້າງໃຫ້ປະຊາຊົນມີວຽກເຮັດງານທຳເປັນຫລັກແຫ່ງໂດຍສະເພາະແມ່ນຜູ້ຍິງ ແລະ ເດັກນ້ອຍ. ເວລາພັກຮຽນແມ່ນໄດ້ສ້າງລາຍໄດ້ໃຫ້ກັບນັກຮຽນເປັນຕົ້ນແມ່ນການຈ້າງເກັບໃບມອນ, ໝາກມອນ ແລະ ອື່ນໆ.

ໃນປີ 1996 ແມ່ນຍັງບໍ່ມີການເຂົ້າຮ່ວມຂອງປະຊາຊົນເທື່ອ, ຕົກມາຮອດປີ 1997 ໄດ້ມີຂະມຸ, ມີ້ງ, ປະຊາຊົນຢູ່ບ້ານ ພູດົ່ນແດງ ໄດ້ເຂົ້າມາມີສ່ວນຮ່ວມໃນການປູກມອນນ້ຳທ່ານ ທະນົງສີ ໂສລາໆມູນ ເປັນຄັ້ງທຳອິດ, ໃນປີ 1998 ໄດ້ມີອາສາສະໝັກມາເຂົ້າຮ່ວມ, ແລະ ປະຊາຊົນຢູ່ບ້ານ ພູດົ່ນແດງກໍ່ເພີ່ມຂຶ້ນເປັນຈຳນວນຫຼາຍ ແລະ ໄດ້ປຸກສ້າງໂຮງຮຽນອີກ 2 ຫລັງ ຢູ່ບ້ານ ປາກປ້ ໃນປີ 1999 ມີອາສາສະໝັກມາຈາກບ້ານ ພູດົ່ນແດງ ມີສ່ວນຮ່ວມໃນການເຮັດສວນມອນ ແລະ ໄດ້ສ້າງລາຍໄດ້ໃຫ້ແກ່ຊາວບ້ານ ມີລາຍຮັບເຂົ້າສູ່ຄອບຄົວຢ່າງເປັນປົກກະຕິ.

ປີ 2000 ທ່ານ ທະນົງສີ ໂສລາໆມູນ ໄດ້ມີການເປີດກ້ວາງເພື່ອສ້າງໃຫ້ປະຊາຊົນມີການປະກອບສ່ວນໃນການປູກມອນລ້ຽງມ້ອນ ເທົ່ານັ້ນ ແຕ່ທ່ານຍັ້ງເຮັດໃຫ້ບ້ານ ພູດົ່ນແດງດີຂຶ້ນ. ປີ 2001 ໄດ້ມີອາສາສະໝັກ ແລະ ປະຊາຊົນເຂົ້າຮ່ວມ ໃນການປູກມອນລ້ຽງມ້ອນ ເຮັດຊາເຮັດໄໝ ໄດ້ເປັນຈຳນວນຫຼວງຫຼາຍ ແລະ ໄດ້ເພີ່ມລາຍໄດ້ໃຫ້ປະຊາຊົນ ໄດ້ມີການກິນຢູ່ທີ່ດີຂຶ້ນເລື້ອຍໆ.

4./ ການເຄື່ອນຕົ້ນ ກ່ຽວກັບການທ່ອງທ່ຽວ.

1996	1997	1998	1999	2000	2001	2002
-	-	ທ່ານທະນົງສີ ແມ່ນເລີ່ມມີການທ່ອງທ່ຽວເຂົ້າມາກ່ຽວຂ້ອງ ເພາະວ່າການ ປູກມອນລ້ຽງມ້ອນ ຂອງເຫີ່ນນີ້ແມ່ນມີ ການໂຄສະນາໄປທົ່ວ ທຸກບ່ອນແລະມີການ ເປີດຮັບເອົາອາສາ ສະໝັກ ດັ່ງນັ້ນຈຶ່ງ ເຮັດໃຫ້ເກີດມີນັກ ທ່ອງທ່ຽວເພີ່ມຂຶ້ນ ເປັນຈຳນວນຫຼາຍ	ໄດ້ມີນັກທ່ອງ ທ່ຽວເຂົ້າມາຊົມ ສວນມອນແລະ ໄດ້ມາພັກເຊົາທີ່ ບ້ານພັກ ແລະໃຫ້ບໍລິການ ຈາກຮ້ານອາ ຫານຂອງທ່ານ ທະນົງສີເພາະວ່າ ເຫີ່ນມີຫ້ອງເຮືອນ ພັກ ແລະຮ້ານອາ ຫານ	ມີນັກທ່ອງທ່ຽວ ເຂົ້າມາເປັນ ປົກກະຕິ. - ມີນັກວິໄຈ ຊາວຕ່າງຊາດ ແລະມີພາກ ສ່ວນອື່ນໆທີ່ ຕ້ອງການສຶກ ສາຫາຄວາມຮູ້ ກໍ່ເຂົ້າມາເປັນ ຈຳນວນຫຼວງ ຫຼາຍ.	ທ່ານ ບຸນຍັງ ວໍລະຈິດ ໄດ້ນຳເຂົ້າ ມາທ່ຽວຊົມ ສວນມອນ ອະທິ ບາຍ ແລະ ກິດຈະການ ຂອງທ່ານທະ ນົງສີອີກດ້ວຍ.	ປະຈຸບັນ ກໍ່ຍັງມີນັກວິໄຈ ຕື່ນເຮັດວິໄຈ ກ່ຽວກັບລາຍ ໄດ້ຈາກການ ປູກມອນຂອງ ທ່ານທະນົງສີ.

PDF created with pdfFactory Pro trial version www.pdffactory.com

5./ ບັນຫາ ແລະ ອຸປະສັກ.

ລ/ດ	1996	1997	1998	1999	2000	2001	2002
	ຕົ້ນຕົ້ນທໍ່ຍັງບໍ່ ພຽງພໍ ແລະ ບໍ່ສະດວກ ບໍ່ໄດ້ ອ້ອມໜົດ	ດິນປູກປ້ຳ ຍັງບໍ່ພຽງ ພໍ ກັບຄວາມ ຕ້ອງການ ຍັງ ໄດ້ຊໍ້າດິນ ຢູ່	ຍັງຂາດ ປະສົບ ການບາງ ເລັກນ້ອຍ	ເລີ່ມຂະຫຍາ ຍພາຍຂຶ້ນ ເພາະວ່າທຸກຄົນ ຈະຫາເງິນຂອງ ທ່ານ ຫະນົງສີ ດຳເນີນໄປດ້ວຍ ດີ	✓	✓	✓

II. ບ້ານພູດົນແດງ

ບ້ານພູດົນແດງ ຕັ້ງຢູ່ ເມືອງ ວັງວຽງ ແຂວງ ວຽງຈັນ ຢູ່ ທາງພາກເໜືອ ບ້ານພູດົນແດງເປັນ ໝູ່ ບ້ານທີ່ມີປະຊາຊົນຫຼາຍ ຊົນຊາດຊົນເຜົ່າ ມາອາໃສຢູ່ບ້ານດຽວກັນ.

1. ສະພາບບ້ານ

- ບ້ານພູດົນແດງ ເປັນໝູ່ບ້ານນ້ອຍ ຕັ້ງຢູ່ແຄມແມ່ນ້ຳຂອງ.
- ມີປະຊາຊົນຢູ່ຮ່ວມກັນ 3 ຊົນເຜົ່າ ທີ່ມາອາໃສຢູ່ນຳກັນຄື: ຂະມຸ, ມົ້ງ, ໄທບ້ານອື່ນໆ.
- ເປັນໝູ່ບ້ານທີ່ອົບພະຍົບ ມາຈາກຫຼາຍບ່ອນ ຫຼາຍກ້ອງຖິ່ນ ທີ່ແຕກຕ່າງກັນໄປ.
- ມີຈຳນວນປະຊາກອນທັງໜົດ 1.036 ຄົນ.

2. ສາຍເຫດຂອງການເຂົ້າຮ່ວມວຽກງານ ຂອງຂວນມອນຊີວະພາບ.

- ເປັນວຽກງານ ທີ່ອະນຸລັກຫາປະຊາຊົນ.
- ເປັນວຽກງານ ທີ່ສ້າງ ແລະ ເພີ່ມລາຍໄດ້ ໃຫ້ແກ່ປະຊາຊົນ. ໃນບ້ານພູດົນແດງ.
- ແລະເປັນການສ້າງ ໃຫ້ປະຊາຊົນບ້ານພູດົນແດງ ມີວຽກເຮັດງານທຳ ມີລາຍຮັບເພີ່ມຂຶ້ນ. ລາຍໄດ້ກໍ່ ເພີ່ມຂຶ້ນ.

3. ກຸ່ມຄົນຜູ້ເຂົ້າຮ່ວມ

- ຊາວບ້ານຈຳນວນໜຶ່ງ
- ອາສາສະໝັກ ມາຈາກຫຼາຍບ່ອນ.

PDF created with pdfFactory Pro trial version www.pdffactory.com

4. ລາຍໄດ້ລະດັບບຸກຄົນ

- ຈາກການຕຳຫຸກ ມີ 12 ຄົນ ສະເລ່ຍແລ້ວ ໄດ້ 50 - 60 ຫົນຕໍ່ເດືອນ. ສຳລັບຄ່າຈ້າງແມ່ນ 10.000k - 15000 ຕໍ່ມື້

- ພວກສາວໃໝ ມີສອງຄົນ ລາຍໄດ້ 15000k/ ຄົນ

- ຊ່ວຍລ້ຽງນອນ ກໍ່ໄດ້ມື້ 1 ຕໍ່ 15000k/ ຄົນ

- ການເຮັດຊາໃບມ້ອນ ແມ່ນໄດ້ 20.000k/ ຄົນ ຖ້າກິນເຂົ້ານຳແມ່ນ 15000k/ ຄົນ

III. ບ້ານອື່ນໆ.

ແມ່ນໄດ້ໃຫ້ຄວາມສົນໃຈຫຼາຍ ກ່ຽວກັບ ການປູກມ້ອນລ້ຽງມ້ອນ ຂອງທ່ານທະນົງສີ. ຢູ່ ບ້ານໜູດົນແດງ. ເພາະວ່າ ທ່ານ ທະນົງສີ ເພີ່ນສ້າງສວນມ້ອນ ຂຶ້ນມາ ກໍ່ເພື່ອ ອະນຸລັກຮັກສາຫ້ຳທຳມະຊາດ ແລະ ຫັ້ງເຮັດໃຫ້ຊາວບ້ານ ມີສ່ວນຮ່ວມ ໃນການອະນຸລັກຮັກສາ ຫ້ຳສ້າງ ລາຍໄດ້ໃຫ້ແກ່ຜູ້ເຂົ້າຮ່ວມຕື່ມອີກ.

1./ ຄວາມເຂົ້າໃຈ ກ່ຽວກັບແນວຄິດ ແລະ ວຽກງານຂອງ ສວນມ້ອນໜູດົນແດງ

- ແມ່ນເຂົ້າໃຈດີ ເຖິງການເຮັດວຽກ ແບບມີສ່ວນຮ່ວມ ຂອງປະຊາຊົນ, ເຮັດສວນມ້ອນຊີວະພາບ ນີ້ ແມ່ນໄດ້ຮັບການຍອມຮັບ ຈາກໝູ່ບ້ານຕ່າງໆ ແລະ ປະຊາຊົນທົ່ວໄປ.

2./ ປະໂຫຍດທີ່ໄດ້ຮັບ

- ແມ່ນຄວາມພາກພູມໃຈ

- ໄດ້ເຮັດໃຫ້ປະຊາຊົນ ມີວຽກເຮັດງານທຳຫຼາຍຂຶ້ນ.

- ໄດ້ເພີ່ມລາຍໄດ້ສູ່ຄອບຄົວ ແລະ ສ້າງໃຫ້ປະຊາຊົນມີລາຍໄດ້

- ໄດ້ສ້າງໃຫ້ໝູ່ບ້ານໜູດົນແດງ ຈະເລີນກ້າວໜ້າຂຶ້ນ

3./ ແນວຄິດຂອງຜູ້ກ່ຽວຂ້ອງ

- ມີຄວາມຫ້າວຫັນຕໍ່ການເຮັດວຽກ

- ມີຄວາມໝັ້ນໃຈ ແລະ ສະມັກໃຈ ທີ່ຈະເຂົ້າມາເຮັດວຽກນີ້

- ເພາະພວກທີ່ມາກ່ຽວຂ້ອງ ເຂົາເຈົ້າຄິດວ່າ ມັນໄດ້ສ້າງລາຍໄດ້ ແລະ ໄດ້ສຶກສາ ໃຫ້ເຂົາເຈົ້າຮູ້ເຖິງ ຄຸນປະໂຫຍດ ທີ່ໄດ້ຮັບຈາກ ການປູກມ້ອນລ້ຽງມ້ອນ.

IV. ກິດຈະກຳກ່ຽວກັບການຫ່ອໜ່ຽວ.

1. ກິດຈະກຳອາສາສະໝັກ

- ຕື່ນເຊົ້າມາຕ້ອງໄດ້ມາເຮັດວຽກໃນສວນມ້ອນເຊັ່ນ : ຕັດຫຍ້າ, ຕັດຕົ້ນມ້ອນທີ່ບໍ່ເອົາແລ້ວຖິ້ມ, ເຮັດອານາໄມໃນສວນມ້ອນ.

- ພວກອາສາສະໝັກແມ່ນເຮັດວຽກມື້ນຶ່ງ 4 h.

PDF created with pdfFactory Pro trial version www.pdffactory.com

2. <u>ເຮືອນພັກ ແລະ ຮ້ານອາຫານ.</u>

ຕັ້ງແຕ່ ປີ 1998 - 2002 ແມ່ນໄດ້ຂະຫຍາຍກິດຈະການພ້ອມຄອບ ເຮືອນພັກ ແລະ ຮ້ານອາ ຫານແມ່ນໄດ້ນຳລາຍໄດ້ມາສູ່ເສດຖະກິດຄອບຄົວ ຂອງທ່ານ ທະນົງສີ ເປັນຈຳນວນຫຼວງຫຼາຍ ເຊັ່ນ: ຄ່າເຮືອນພັກແມ່ນ 1 ຄືນ/ 200 B ຖ້າພວກອາສາສະໝັກ ແມ່ນ1 ຄືນ50 B.

- ຮ້ານອາຫານ ກໍ່ໄດ້ລາຍໄດ້ເຂົ້າມາໃນແຕ່ລະມື້, ໂດຍການນຳເອົາຄົ້ກຕາມລວນມາປຸງແຕ່ງ ເປັນອາຫານຂາຍ.
- ຖ້າພວກອາສາສະໝັກ ຫຼື ນັກວິໄຈ ແມ່ນມີການຫຼຸດລາຄາໃຫ້ເປັນພິເສດ.
- ໄດ້ຕອບສະໜອງໃຫ້ແກ່ພວກທີ່ມາທ່ອງທ່ຽວໃນແຕ່ລະມື້ ໃນການຂາຍອາຫານ, ນ້ຳ ແລະ ອື່ນໆ.

3./ <u>ຄວາມຄິດເຫັນຂອງຜູ້ເຂົ້າຮ່ວມ.</u>

- ສ່ວນຫຼາຍແມ່ນໃຫ້ຄວາມສົນໃຈດີ ໃນດ້ານການເຮັດລວນມອນຊີວະພາບ
- ຢາກໃຫ້ທ່ານ ທະນົງສີ ໂຮລາງກູນ ປັບປຸງທາງດ້ານເຮືອນພັກ.
- ຢາກໃຫ້ລ້ຽງມ້ອາຊີບກ່ຽວກັບການລ້ຽງປັອນລາວໄຫມໃຫ້ດີກວ່າເກົ່າ.
- ຢາກໃຫ້ຜູ້ເປັນມ້ອາຊີບເຂົ້າມາຊ່ວມນຳກັນຫຼາຍໆ.

<u>V. ບົດສະຫຼຸບວິເຄາະ.</u> (ຍັງບໍ່ແລ້ວເທື່ອ)

ການປະກອບສ່ວນຄວາມຄິດເຫັນຕໍ່ຄູ່ກໍລະນີສຶກສາ.

1. ວິໆຈອນລາຍໄດ້ຈາກລວນມອນຊີວະພາບ ແລະ ຈາກການທ່ອງທ່ຽວ ແລະ ຄວາມສຳພັນກັບ ຊຸມຊົນ ກໍລະນີສຶກສາຈາກລວນມອນ ພູດິນແດງ ເມືອງ ວັງວຽງ ແຂວງວຽງຈັນ.

ຂໍ້ສັງເກດ :

① ແນວຄິດຂອງທ່ານ ທະນົງສີ ເກີດຈາກການ :

- ສະສົມ
- ພັດທະນາການ
- ຮັບເອົາຈາກຜູ້ອື່ນ
- ລອງຜິດລອງຖືກ
- ເອົາລາຍລະອຽດຕື່ມ.

② ອາສາສະໝັກ

③ ກົນໄກລະ

④ ໃຈ້ແຍກໃຫ້ເຫັນລະຫວ່າງ 2 ກໍລະນີສຶກສາ (ຄ້ຍກຽບກັນ)

PDF created with pdfFactory Pro trial version www.pdffactory.com

ການເລີ່ມຕົ້ນ	ພູດິນແດງ	ນາສາ
	ບ້ານເກີດ, ທ່າແຮງ	
ຊາວບ້ານມີສ່ວນຮ່ວມ	ແຮງງານ	
ເງື່ອນໄຂຫ້າມຂອດ ແລະອື່ນໆ		

<u>ຂໍ້ສະເໜີເພີ່ມເຕີມ</u> :

- ຄວນມີການເວົ້າກ່ຽວກັບຍົດບາດຂອງຜູ້ຍິງຢ່າງຈະແຈ້ງ, ຢາກຮູ້ວ່າສວນມອນພູດິນແດງ ເຮັດໃຫ້ເກີດການຫຼຸດຜ່ອນການອົບພະຍົບແຮງງານຜູ້ຍິງອອກຈາກບ້ານພູດິນແດງ.
- ສະແດງໃຫ້ເຫັນປັດໃຈ ແລະທ່າແຮງຂອງການຕະຫຼາດ.
- ຄິດວ່າໂຄງການສວນມອນ ພູດິນແດງ ເປັນໂຄງການທີ່ມີ ລັກສະນະເດັ່ນ ຄວນຈະມີການ ຍົກສູງໃຫ້ເປັນຕົວແບບ ແລະ ສາມາດຮູ້ແນວຄິດຂອງລັດຖະບານໄດ້.
- ຢາກຮູ້ວ່າ ຊາວເມືອງຈັນໆ ໄດ້ຮັບຜົນປະໂຫຍດທີ່ກ່ຽວຂ້ອງກັບການຫ່ອງໜ່ຽວແນວໃດ ?
- ຢາກຮູ້ວ່າເງິນທີ່ປະຊາຊົນໄດ້ມາຈາກສວນມອນພູດິນແດງຖືກໃຊ້ໄປແນວໃດ?
- ຄົນໃຈວ່າ ປະຊາຊົນມີວຽກທ່າແຮງສຶກສ້າແນວໃດ ກ່ອນທີ່ຈະມີສວນມອນພູດິນແດງ
- ຢາກຮູ້ບັນຫາກ່ຽວກັບການນ້ຳໃຊ້ທີ່ດິນ (ສວນມອນ ພູດິນແດງ ຂໍ້ດິນມາຈາກໃສ ?) ແຕ່ກ່ອນແມ່ນນ້ຳໃຊ້ດິນແນວໃດ ? ເປັນດິນລອມຫຼື ດິນສ່ວນຕົວ, ສວນມອນພູດິນແດງມີ ຜົນກະທົບໃນການໃຊ້ດິນຄືແນວໃດ.
- ມີການມອບດິນມອບປ່າແລ້ວ ບໍ່ຢູ່ໃນບ້ານ ພູດິນແດງ.
- ປະຊາຊົນສາມາດຈະນ້ຳໃຊ້ທີ່ດິນໃນການປູກມອນໄດ້ແທ້ບໍ.?
- ຊາວບ້ານໄດ້ເຂົ້າຮ່ວມໃນວຽກງານກ່ຽວກັບການຫ່ອງໜ່ຽວຫຼືບໍ ?
- ຜູ້ຍິງສ່ວນໃຫຍ່ແມ່ນເຮັດຫຍັງແດ່ ? ກ່ອນແລະຫລັງການເຮັດສວນມອນ.
- ຜູ້ຍິງ ແລະ ຜູ້ຊາຍ ມີການຮ່ວມວຽກນ້ຳກັນບໍ ?
- ດິນໃນການປູກມອນນີ້ ມີຄວາມໝັ້ນຄົງຫຼາງໃດ.
- ມີພັດທະນາການແນວໃດໃນການນ້ຳໃຊ້ດິນ.

PDF created with pdfFactory Pro trial version www.pdffactory.com

ຫົວຂໍ້ໃຫຍ່ III

ຊຸມຊົນປະທານ ແລະ ການເຮັດບາ

3.1 **ຊຸມຊົນປະທານຂະໜາດນ້ອຍເພື່ອແກ້ໄຂບັນຫາການຂາດເຂົ້າກິນ ແລະການຖາງປ່າເຮັດໄຮ່.**

ກໍລະນີສຶກສາ: ບ້ານດອນນ້ອຍ

1./ **ຄວາມເປັນມາແລະແນວຄິດຂອງການວິໄຈ**

ຈຸດປະສົງ: ແມ່ນເພື່ອປະເມີນຜົນກະທົບຈາກໂຄງການຊຸມຊົນປະທານຂະໜາດນ້ອຍຕໍ່ກັບການແກ້ໄຂບັນຫາ, ການຂາດເຂົ້າກິນ ແລະ ການຖາງປ່າເຮັດໄຮ່.

- ເພື່ອການປັບປຸງການຈັດຕັ້ງປະຕິບັດກິດຈະກຳໃນອານາຄົດ.

2./ **ຂອບເຂດຂອງການວິໄຈ.**

ປະຫວັດຄວາມເປັນມາຂອງຊຸມຊົນປະທານຂອງ ສປປ ລາວ

- ຊຸມຊົນປະທານແບບປ່ຽນປະຖານ
- ລະບົບຊຸມຊົນປະທານຂະໜາດໃຫຍ່ແລະແນວຄິດຂອງລັດຖະບານ (ເລື່ອງການຟຸດຕີການຖາງປ່າເຮັດໄຮ່)

ປະຫວັດຄວາມເປັນມາຕໍ່ແນວຄິດການເຮັດວຽກຊຸມຊົນປະທານຂອງ Quakers.

- ຊຸມຊົນປະທານຂະໜາດນ້ອຍ ແລະຊຸມຊົນປະທານແບບຄອບຄົວ.

ສະພາບລວມຂອງເມືອງໄຊ. ບ້ານດອນນ້ອຍ

- ສະພາບເສດຖະກິດສັງຄົມ
- ສະພາບພູມນິປະເທດ
- ລະບົບຊຸມຊົນປະທານຢູ່ເມືອງໄຊ – ການຂາດເຂົ້າກິນ
  – ການຖາງປ່າເຮັດໄຮ່

ຊຸມຊົນປະທານຂະໜາດນ້ອຍ ແລະ ຄອບຄົວຢູ່ເມືອງໄຊ

- ການຈັດຕັ້ງປະຕິບັດ
- ແນວຄວາມຄິດກ່ຽວກັບຜົນໄດ້ຮັບການກໍ່ສ້າງຊຸມຊົນປະທານຂະໜາດນ້ອຍແລະຄອບຄົວ(ບ້ານ, ອ້ອງການ, ລັດຖະບານ)
- ຜົນໄດ້ຜົນເສຍ ສາຍເຫດວິທີແກ້ໄຂ
- ລະຖີຕີຜົນໄດ້ຮັບກ່ຽວກັບການຂາດເຂົ້າກິນ(ຜົນຜະລິດເຂົ້າຕ້ອງສົມທຽບກ່ອນບໍ່ມີຊຸມຊົນປະທານ ແລະ ຫລັງມີຊຸມຊົນປະທານ)
- ລະຖີຕີຜົນໄດ້ຮັບກ່ຽວກັບການຖາງປ່າເຮັດໄຮ່.

PDF created with pdfFactory Pro trial version www.pdffactory.com

ສະຫຼຸບແລະວິເຄາະ

- ສົມທຽບສະຫຼຸບຜົນກະທົບທາງດ້ານບວກແລະດ້ານລົບຂອງໂຄງການໃນຄວາມຄິດຂອງປະຊາຊົນ, Quakers ແລະ ລັດຖະບານ

Quakers

<u>ງຸງການຊົນລະປະທານ</u>

<< ແມ່ນການແກ້ໄຂບັນຫາຂາດເຂົ້າກິນ ແລະ ການຖາງປ່າເຮັດໄຮ່ ຂອງເມືອງໄຊ ແຂວງ ອຸດົມໄຊ >>

ເລີ່ມມີການເຮັດຊົນລະປະທານໃນປີ 1997-98 ເປັນຕົ້ນມາ, ມີ ແຂວງ ອຸດົມໄຊ, ແຂວງຫຼວງ ພະບາງ ແລະ ແຂວງວຽງຈັນ.

ປະຈຸບັນແມ່ນເຮັດ 2 ໂຄງການ:

- ແຂວງອຸດົມໄຊມີ+ ເມືອງໄຊ ເລີ່ມປີ 1997
  - + ນໍ້ທໍ້
  - + ເມືອງຫຼາ
- ແຂວງຜົ້ງສາລີ

ບັນຫາທີ່ມີກແມ່ນບັນຫາຂາດເຂົ້າກິນ, ອົງການ Quakers ໄດ້ໃຫ້ການຊ່ວຍເຫຼືອເມືອງໄຊເຊັ່ນ: ໄດ້ສ້າງຊົນລະປະທານເພື່ອໃຫ້ເຂົາເຈົ້າໄດ້ນໍາໃຊ້ແບບຖາວອນຈາກແຕ່ກ່ອນຈະສ້າງດ້ວຍໄມ້ເມື່ອມີນໍ້ນອງນໍ້ຫຼາຍກໍ່ຈະເຮັດໃຫ້ຝາຍພັງ. ແຕ່ມາຮອດປັດຈຸບັນນີ້ແມ່ນເຮັດດ້ວຍຄອນກີດຊຶ່ງມີຄວາມແຂງແຮ່ງ ແລະໝັ້ນຄົງ.

ອົງການ Quakers ໄດ້ມີການສົ່ງເສີມແລະຊ່ວຍເຫຼືອບ້ານດັ່ງກ່າວມາໂດຍຕະຫຼອດ

ຂັ້ນຕອນ:

- ຮູບແບບມີຢູ່ 2 ປະເພດ: - ຊົນລະປະທານຂະໜາດນ້ອຍ,ໃຊ້ປະມານ 10 ຮຕ ຂຶ້ນໄປ.
  - ຊົນລະປະທານແບບຄອບຄົວ ຮັບໃຊ້ເຂດບ້ານ,ເຂດໜຶ່ງຄອບສໍາລັບທີ່ນາໜ້ອຍ
- ວິທີປະຕິບັດ: ເຮັດແບບມີສ່ວນຮ່ວມ: - ພາກລັດອອກແບບ,ເຕັກນິກ
  - ພາກອົງການ ຝຶກອົບຮົມ, ວັດຖຸຕ່າງປະເທດ
  - ປະຊາຊົນ ແມ່ນເປັນແຮງງານ, ວັດຖຸບາງ ສ່ວນ,ພື້ນທີ່,ຫີນຊາຍ,ໄມ້ແບບ.
- ລະບະການ: - ຂັ້ນເມືອງ
  - ຂັ້ນບ້ານ

ພາຍຫລັງທີ່ສ້າງແລ້ວຈັດຕັ້ງກຸ່ມທີ່ນໍາໃຊ້ນໍ້ແລະຝຶກອົບຮົມ, ເວລາມີການເປເພທີ່ຊ່ວຍກັນສ້ອມແປງ, ມີການເກັບເງິນຄ່ານໍ້ ຄ່າເຂົ້າ ເພື່ອໃນເວລາເປເພເຮົາຈະມີເງິນລວມໄປສ້ອມແປງ.

PDF created with pdfFactory Pro trial version www.pdffactory.com

ຜົນໄດ້ຮັບຈາກການເຮັດຊົນລະປະຫານ:

- ປະຊາຊົນໄດ້ຝາຍແບບຖາວອນ.
- ປະຊາຊົນມີຖ້ຳລະດວກໃນການທຳການຜະລິດ ແລະ ປູກເຂົ້ຳ
- ເນື້ອທີ່ນາເພີ່ມຂຶ້ນ (ຈາກບ່ອນທີ່ບໍ່ມີນ້ຳກໍ່ມີນ້ຳຫຼາຍ).
- ການຜະລິດເຂົ້ຳໄດ້ຮັບຜົນຫຼາຍ ຍ້ອນມີລະບົບນ້ຳຊົນລະປະທານພຽງພໍ.
- ມີການຢຸດຕິການຖາງປ່ຳເຮັດໄຮ່, ຫັນມາສູ່ການເຮັດນາ
- ຊີວິດການເປັນຢູ່ຂອງປະຊາຊົນດີຂຶ້ນ ຍ້ອນການເຮັດນາມີເຂົ້ຳຫຼາຍ ກຸ້ມຢູ່ກຸ້ມກິນ.
- ລະດູແລ້ງ ກໍ່ສາມາດທຳການຜະລິດຜົນລະປູກອື່ນໆ ເຊິ່ງເຮັດໃຫ້ເຂົ້ຳເຈົ້ຳມີລາຍໄດ້ຕະຫຼອດປີ.

ຜົນກະທົບ :

ໃນເວລາມີນ້ຳບ່ອໆ ເຮັດໃຫ້ນ້ຳເຊາະດິນເຈື່ອນ, ການກັດກັນນ້ຳ ຍ້ອນການຕັດໄມ້ຫຼາຍ.

PDF created with pdfFactory Pro trial version www.pdffactory.com

ໂຄງການວິໄຈ ທວນຄືນ 10 ປີ ວຽກງານພັດທະນາຢູ່ລາວ

ຫົວຂໍ້ 4 : ປ່າໄມ້ຊາວບ້ານ ການນຳໃຊ້ທີ່ດິນ ແລະ ຮີດຄອງການເຮັດໄຮ່ ຂອງປະຊາຊົນ

ຫົວຂໍ້ 4.1 ການຄຸ້ມຄອງ ນຳໃຊ້ທີ່ດິນ ແລະ ປ່າໄມ້ ຂອງບ້ານ ນາບໍ່ ເຂດ ນາບໍ່ ເມືອງ ຍິມມະລາດ ແຂວງ ຄຳມ່ວນ :

ນິຕຍາດຂອງໂຄງການຕ່າງໆ ແລະ ແນວຄິດຂອງຊາວບ້ານ.

ຄວາມເປັນມາຂອງແນວຄິດຂອງການວິໄຈ.

ບ້ານ ນາບໍ່ ເມືອງ ຍິມມະລາດ ຊົນເຜົ່າ ໄຍ້ຍ ຊົນຊາດລາວລຸ່ມ ຊາວບ້ານຕັ້ງແຕ່ໃດມາສ່ວນຫຼາຍ ແມ່ນມີອາຊີບຫລັກ ເຮັດນາ ອາຊີບລ້ຽງ ເຮັດໄຮ່ ເພື່ອການດຳລົງຊີວິດ ແລະ ໄດ້ລາຍຮັບຈາກ ການຂາຍເຄື່ອງປ່າຂອງດົງ ການດຳລົງຊີວິດຂອງຊາວບ້ານ ອາໃສຊັບພະຍາກອນທຳມະຊາດເປັນຕົ້ນ ຕໍ.

ຕົກມາຮອດປີ 2000 ໄດ້ມີພາກສ່ວນເອກະຊົນເຂົ້າມາພົວພັນກັບນາຍບ້ານ ໂດຍນາຍບ້ານບໍ່ ໄດ້ປຶກສາກັບຊາວບ້ານ ເພື່ອປູກຕົ້ນໄມ້ໃຫຍ່ໄວ (ໄມ້ວິກ) ໃນເຂດປ່າເຈົ້າ (ດິນເປົ່າຫວ່າງທີ່ຊາວບ້ານ ເຮັດໄຮ່ ແລະ ບ່ອນລ້ຽງສັດ ແລະ ສ່ວນໜຶ່ງເປັນສວນ)ຂອງບ້ານ ໃນເນື້ອທີ່ 100 ເຮັກຕາ.

ຫລັງຈາກນັ້ນ ປີ 2001 ທີມງານມອບດິນ- ມອບປ່າຂອງເມືອງ ສົມທົບກັບທີມງານຈາກໂຄງ ການສົ່ງເສີມກະສິກຳ-ປ່າໄມ້ ແບບມີສ່ວນຮ່ວມ ຂອງພະແນກກະສິກຳ-ປ່າໄມ້. ສະຫະພັນແມ່ຍິງແຂວງ ແລະ ອົງການເຈວີຊີ ໄດ້ລົງຈັດສັນທີ່ດິນ ແລະ ມອບດິນ-ມອບປ່າ.

ການສຶກສານີ້ ຈັດທຳຂຶ້ນໂດຍ ອົງການຄລາລາສະໜັກຍີ່ປຸ່ນ (ເຈ ວີ ຊີ) ປະຈຳແຂວງ ຄຳມ່ວນ ເພື່ອສະແດງໃຫ້ເຫັນສະພາບການປ່ຽນແປງດຳລົງຊີວິດຂອງຊາວບ້ານກ່ອນ ແລະ ຫລັງ ທີ່ມີເອກະຊົນ ພາກສ່ວນລັດ ແລະ ອົງການພັດທະນາ ເຂົ້າມາມີບົດບາດໃນການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ແລະ ປ່າ ໄມ້ ຫວັງວ່າການສຶກສານີ້ ຈະເປັນແນວທາງ ໃນການມີສ່ວນຮ່ວມ ໃນການເຮັດວຽກຂອງ 3 ອົງກອນທີ່ ກ່າວມາຂ້າງເທິງ.

1. **ຄວາມເປັນມາຂອງບ້ານ** :

ບ້ານ ນາບໍ່ ເມືອງ ຍິມມະລາດ ແຂວງ ຄຳມ່ວນ ບ້ານດັ້ງເດີມໄດ້ປະມານ 300 ປີ ທ້າອິດມີ 1 ຄອບ ຄົວ ມາຈາກບ້ານ ນອນ (ສະກົນນະຄອນ ປະເທດໄທ) ຜູ້ທີ່ມາຕັ້ງບ້ານຊື່ ເຈົ້າພະອິດສັກສາ ເມື່ອມາຢູ່ ເຫັນວ່າທີ່ນີ້ເໝາະສົມກັບການດຳລົງຊີວິດ ໃນທ້າອິດເຮັດໄຮ່ ຫລັງຈາກນັ້ນ ຈຶ່ງໄດ້ຂັບຊ່ຳວນ ໄດ້ນຳ

PDF created with pdfFactory Pro trial version www.pdffactory.com

ເອົາແນວພັນເຂົ້າປູກ ເມື່ອເຫົ່ຍັງເຂົ້າສຸກນົກເຂົ້າຂັ້ນ ພວກຂ້າຂອມພວກເຂົ້າ ຫາກິນເຜືອກມັນຕາມປ່າ ໄມ້ ໄດ້ຍິນສຽງນົກເຂົ້າຂັ້ນ ຈຶ່ງມາຊອກຫາ ຈຶ່ງພົບກັບເຈົ້າພະອິດຮັກສາ ຈຶ່ງໄດ້ຮັກແພງກັນ ພາກັນຊັບ ຊ່າວໄຮ່ນາ ຊື່ບ້ານໄດ້ມາຈາກແຕ່ກ່ອນບໍ່ມີນາ (ແຕ່ກ່ອນ) ເຂດນີ້ ຕົກມາຊ່ວງຫຼັງ ເກີດພະຍາດຖອກ ທ້ອງຢ່າງຮຸນແຮງ ເຮັດໃຫ້ຊາວບ້ານຕາຍເປັນຈຳນວນຫຼວງຫຼາຍ ຊາວບ້ານຈຶ່ງພາກັນຍ້າຍໄປປູກເຮືອນ ຕາມໄຮ່ນາ ແລະ ຢູ່ບ້ານ ທີ່ໆກອງ, ຄຳແຮ່ ບ້ານສູດມະຈອງ

ຫລັງຈາກນັ້ນ ກໍ່ໄດ້ກັບຄືນມາຕັ້ງບ້ານເຮືອນອີກ ທຳອິດ 4 ຄອບຄົວຄື : ແມ່ເຖົ້າກູ່, ພໍ່ເຖົ້າກັນຫາ, ພໍ່ເຖົ້າພະເສນ ແລະ ແມ່ເຖົ້າບຸນເພັ່ງ.

- ການປ່ຽນແປງໃນແຕ່ລະໄລຍະ (ເສດຖະກິດ, ສັງຄົມ ແລະ ຊັບພະຍາກອນທຳມະຊາດ).

ຕາມການບອກເລົ່າຂອງຊາວບ້ານໃຫ້ຮູ້ວ່າ : ການດຳລົງຊີວິດ ແມ່ນພົວພັນກັບຊັບພະຍາກອນປ່າ ໄມ້ ກ່ອນທີ່ຄົນເຮົາຍັງບໍ່ທັນ ມີ ການເຮັດໄຮ່ ແມ່ນອາໃສ ຊຸດເຜືອກມັນຕາມທຳມະຊາດ ລ່າສັດ ດ້ວຍເຄື່ອງມືພື້ນບ້ານ ປ່າໄມ້ດົງໜາ ມີອາຫານສຳລັບລ້ຽງຊີບໄດ້ພໍສົມຄວນ ພົນລະເມືອງມີໜ້ອຍ ພໍຕົກມາໄລຍະໜຶ່ງ ເມື່ອພົນລະເມືອງມີຈຳນວນເພີ່ມຂຶ້ນ ເຜືອກມັນຫຼຸດໜ້ອຍລົງ ຊາວບ້ານຈຶ່ງພາກັນຫັນ ປ່ຽນຖາງປ່າເຮັດໄຮ່ ເຂົ້າປູກປະສົມກັບ ພືດຫັນຍາຫານ ບ່ອນໃດທີ່ສາມາດເຮັດນາໄດ້ກໍ່ຊັບຊ່າວ ເຮັດນາ ບ່ອນໃດບໍ່ສາມາດເຮັດນາໄດ້, ກໍ່ເຮັດໄຮ່ໝູນວຽນ ຈາກການເພີ່ມຂຶ້ນຂອງພົນລະເມືອງ ຄວາມຕ້ອງການເນື້ອທີ່ທຳການຜະລິດເພີ່ມຂຶ້ນ ເຮັດໃຫ້ຊັບພະຍາກອນປ່າໄມ້ເລີ່ມຄ່ອຍໆຫຼຸດລົງ ສັດປ່າຫຼຸດໜ້ອຍລົງ ແຫຼ່ງນ້ຳທີ່ເຄີຍມີນ້ຳຕະຫຼອດປີ ຄ່ອຍບໍ່ມີແຫ້ງລົງ ແຕ່ກໍ່ບໍ່ຮ້າຍແຮງ ພໍຕົກມາໃນ ປີ 1997 ພາຍຸພັດເຮັດໃຫ້ຕົ້ນໄມ້ລົ້ມ ເປັນຈຳນວນຫຼວງຫຼາຍ ໃນສົກປີ 1990 - 1991 ລັດໄດ້ມີທຶດ ໜ້າໃຫ້ບໍລິສັດ ພັດທະນາພູດອຍ ເຂົ້າຂຸດຄົ້ນໄມ້ນອນຂອນຕາຍ ຫລັງຈາກນັ້ນຂຸດຄົ້ນໄມ້ຢືນຕົ້ນ ຈຶ່ງເຮັດໃຫ້ປ່າໄມ້ຫຼຸດລົງຢ່າງໄວວາ 5 ປີຜ່ານມາ ອາຊີບຫລັກຂອງຊາວບ້ານ ແມ່ນເຮັດນາ ສຳລັບ ການເຮັດໄຮ່ແມ່ນຫຼຸດລົງ ດ້ວຍຊາວບ້ານຫາລາຍຮັບຈາກການຂາຍເຄື່ອງປ່າຂອງດົງ ແລະ ລ້ຽງສັດ ເພື່ອເພີ່ມໄຮ່.

ໃນປີ 2000 ໄດ້ມີ ເອກະຊົນເຂົ້າມາເພື່ອພົວພັນກັບອຳນາດການປົກຄອງບ້ານ (ຊຸດເກົ່າ) ເພື່ອ ປູກໄມ້ໃຫຍ່ໄວ : ເຈົ້າຂອງໂຄງການ ຊື່ທ່ານ ບຸນເພັ່ງ, ປະເພດໄມ້ໃຫຍ່ໄວ (ໄມ້ວົກ ເນື້ອທີ່ 100 ເຮັກຕາ) , ຈຳນວນທຶນ 700.000.000 ກີບ. ທຶນແມ່ນກູ້ຢືມມາຈາກທະນາຄານພັດທະນາເອຊີ (ADB) ກຳໜົດດອກເບ້ຍ 10%.

- ອຳນາດການປົກຄອງໄດ້ອະນຸຍາດໃຫ້ 100 ເຮັກຕາ ເປັນດິນປ່າເລົ່າ ແຕ່ກ່ອນຊາວບ້ານເຄີຍ ນຳໃຊ້ເຮັດໄຮ່ ເປັນບ່ອນລ້ຽງສັດ ແຕ່ເມື່ອເຮັດຕົວຈິງ ບໍລິສັດໄດ້ບຸກເບີກເກີນຂອບເຂດທີ່ບ້ານໄດ້ ອະນຸຍາດໃຫ້ ໂດຍໃຫ້ຄວາມເຫັນວ່າ ດິນຂອງໂຄງການບໍ່ພໍ ເຊິ່ງໄດ້ກວມເອົາເນື້ອທີ່ທຳການຜະລິດ ຂອງບ້ານຈຳນວນໜຶ່ງ ນຳສະເໜີນາຍບ້ານແກ້ໄຂ ເພື່ອບອກເຈົ້າຂອງໂຄງການເວົ້າວ່າຢາກໄດ້ດິນ ໃຫ້ຄິດໄລ່ຄ່າບຸກເບີກດິນໃຫ້ແກ່ບໍລິສັດ ບັນຫານີ້ຍັງບໍ່ທັນແກ້ໄຂເທື່ອ.

ສັນຍາລະຫວ່າງ ບໍລິສັດ ແລະ ຊາວບ້ານ ?

PDF created with pdfFactory Pro trial version www.pdffactory.com

ການປູກປະຈຸບັນປູກໄດ້ 80 ເຮັກຕາ ການບຸກເບີກ ສ່ວນໜຶ່ງແມ່ນໃຊ້ລົດບຸກເບີກ ຄ່າປູກ 50 ກີບ ຕໍ່ 1 ເບ ແລະ ໃຫ້ຊາວບ້ານຖາງ 200.000 ກີບ ຕໍ່ ເຮັກຕາ ແລະ ຄ່າປູກ 200 ກີບ ຕໍ່ 1 ເບ ໃນປັດຈຸບັນຊາວບ້ານຈຳນວນໜຶ່ງແມ່ນຍັງບໍ່ທັນໄດ້ເງິນຄ່າແຮງງານເທື່ອ ສ່ວນການບົວລະບັດຮັກສາແມ່ນບໍ່ມີ ຊາວບ້ານເອງກໍ່ບໍ່ຮູ້ວ່າ ໄມ້ທີ່ປູກກາຍເປັນຂອງໃຜ ແລະ ຈັກປີຈຶ່ງມອບໃຫ້ບ້ານ.

- **<u>ຊາວບ້ານບໍ່ມີສັນຍາ</u>**.

ປີ 2001 ທີມງານມອບດິນ-ມອບປ່າຂັ້ນເມືອງ ຮ່ວມກັບໂຄງການສົ່ງເສີມກະສິກຳ-ປ່າໄມ້ແບບມີສ່ວນຮ່ວມ ຂອງພະແນກກະສິກຳປ່າໄມ້, ສະຫະພັນແມ່ຍິງແຂວງ ແລະ ອົງການ ເຈວີຊີ ຈຶ່ງໄດ້ລົງເກັບກຳຂໍ້ມູນເບື້ອງຕົ້ນ ກ່ຽວກັບການດຳລົງຊີວິດ (ເສດຖະກິດ, ສັງຄົມ) ແລະ ຊັບພະຍາກອນທຳມະຊາດມີຢູ່ບ່ອນໃດ ເຂດໃດທີ່ຊາວບ້ານຊົມໃຊ້ໄມ້ ເຂດໃດທີ່ເປັນປ່າສັກສິດ (ມີກົດລະບຽບທີ່ຊາວບ້ານເປັນເອກະພາບກັນ ແຕ່ບໍ່ເປັນລາຍລັກອັກສອນ) ເຂດໃດເປັນເຂດທີ່ຊາວບ້ານທຳການຜະລິດ ສະນັ້ນ ໂຄງການຂອງພວກເຮົາ ຈຶ່ງໄດ້ເຂົ້າໄປຊ່ວຍໃນການຈັດສັນ ເພື່ອໃຫ້ຂັ້ນເທິງ ຮັບຮູ້ ໂດຍມີດຳລັດ ແລະ ຂໍ້ກຳນົດເປັນບ່ອນອີງ ໃນການຈັດຕັ້ງປະຕິບັດເຊັ່ນ : ຄຳສັ່ງແນະນຳເລກທີ 03/ນຍ ລົງວັນທີ 25/06/96 ວ່າດ້ວຍການມອບດິນ-ມອບປ່າ, ບົດແນະນຳເລກທີ 822/ກປ ລົງວັນທີ 2/8/96 ວ່າດ້ວຍການມອບດິນ-ມອບປ່າ ເພື່ອຄຸ້ມຄອງນຳໃຊ້, ກົດໝາຍປ່າໄມ້ເລກທີ 01/96 ລົງວັນທີ 11/10/96, ກົດໝາຍທີ່ດິນ ເລກທີ 01/97 ສພຊ ລົງວັນທີ 12/04/97, ກົດໝາຍແຫ່ງຊາດ ເລກທີ 02-96 ລົງວັນທີ 11/10/1996, ການປະຕິບັດມີ 2 ຂັ້ນຕອນຄື :

<u>ຂັ້ນຕອນທີ 1</u> : ລົງໂຄສະນາເຜີຍແຜ່ ຈະເນັ້ນໜັກຄວາມສຳຄັນ ແລະ ຄຸນປະໂຫຍດຂອງປ່າໄມ້ ສ້າງຄວາມເຂົ້າໃຈ ຄວາມສຳຄັນ ການມີສ່ວນຮ່ວມຂອງຍິງ-ຊາຍ ໃນທຸກວຽກງານ ໂດຍສະເພາະໃນການສ້າງແຜນຈັດສັນ ແລະ ຄຸ້ມຄອງປ່າໄມ້ແຕ່ລະປະເພດປ່າໃຫ້ແທດເໝາະກັບສະພາບຂອງທ້ອງຖິ່ນ, ຈັດເຂດທຳການຜະລິດ ແລະ ດິນແຮ່ປຸກສ້າງ ເພື່ອໃຫ້ຄອບຄົວທີ່ບໍ່ມີເນື້ອທີ່ທຳການຜະລິດ ຫຼື ຄອບຄົວທີ່ຂໍດິນເພີ່ມ ໂດຍອີງໃສ່ເງື່ອນໄຂ ສະພາບຄວາມເໝາະສົມຂອງຕອນດິນ ແລະ ຄວາມສາມາດຂອງແຕ່ລະຄອບຄົວ ຫລັງຈາກນັ້ນ ລົງສຳຫຼວດພື້ນທີ່ ຕາມແຜນການຂອງຊາວບ້ານສ້າງຂຶ້ນ ໄດ້ຜ່ານເອກະສານຕ່າງໆທີ່ກ່ຽວຂ້ອງກັບງານມອບດິນ-ມອບປ່າ, ປຶກສາຫາລືກັບບ້ານໄກ້ຄຽງ ຖ້າເອກະພາບກັນຈຶ່ງເຮັດບົດບັນທຶກສັນຍາ.

ຂັ້ນຕອນທີ 2 . ທີມງານມອບດິນ-ມອບປ່າລົງປະຕິບັດຕົວຈິງ ແບ່ງເປັນ 2 ທີມງານຄື :

- ທີມງານ ມອບດິນ ເຮັດວຽກເກັບກຳຂໍ້ມູນ ເສດຖະກິດ-ສັງຄົມ ປຶກສາຫາລືກ່ຽວກັບ 15 ຄອບຄົວທີ່ບໍ່ມີເນື້ອທີ່ທຳການຜະລິດ ແລະ ຂໍເພີ່ມຕາມຄວາມພໍໃຈຂອງເຂົາເຈົ້າ ໄດ້ສຳຫຼວດວັດແທກຕົວຈິງ ດິນກະສິກຳ (ນາ,ໄຮ່ ແລະ ສວນ) ເນື້ອທີ່ 99,49 ເຮັກຕາ. ດິນແຮ່ກະສິກຳ 173.29 ເຮກຕາ, ດິນປຸກສ້າງທີ່ມີແລ້ວ 4 ເຮັກຕາ, ດິນແຮ່ປຸກສ້າງ 14 ເຮັກຕາ ແລະ ຈັດທຳເອກະສານ.

- ທີມງານ ມອບປ່າລົງສຳຫຼວດ ແລະ ໝາຍຂອບເຂດປ່າໄມ້ແຕ່ລະປະເພດ ມີປ່າສະຫງວນ 1 ແຫ່ງ 3.900 ກີບ, ປ່າປ້ອງກັນ 1 ແຫ່ງ 336 ເຮັກຕາ, ປ່າຟື້ນຟູ 1 ແຫ່ງ 125 ເຮັກຕາ, ປ່າຊົມໃຊ້

PDF created with pdfFactory Pro trial version www.pdffactory.com

2ແຫ່ງ 903 ເຮັກຕາ, ປ່າສັກລິດ 2 ແຫ່ງ 2 ເຮັກຕາ ແລະ ປ່າຊຸດໂຊບ 2 ແຫ່ງ 160 ເຮັກຕາ (ໃນນີ້ 100 ເຮັກຕາ ເອກະຊົນປູກໄມ້ວິກ) ພ້ອມຈັດຫາເອກະສານຕ່າງໆ.

✿ <u>ແນວຄວາມຄິດຂອງແຕ່ລະພາກສ່ວນ</u> :

- ແນວຄວາ່ມຄິດຂອງຊາວບ້ານ : ການປູກໄມ້ວິກ ຊາວບ້ານບ່ໄດ້ຮັບຜົນປະໂຫຍດຕ່ໍສ່ວນລວມ ຂອງບ້ານ. ມີແຕ່ຈ້ານວນຊາວບ້ານໜ້ອຍໜຶ່ງເທ່ານັ້ນທ່ີ່ຮັບຈ້າງປຸກເບ້ົາ ແລະ ປູກ, ຕົ້ນປະໂຫຍດ ຕ່າງໆຈະຕົກເປັນຂອງເອກະຊົນພຽງຄົນດຽວ. ສະນັ້ນ ຊາວບ້ານຈ່ຶງຄິດວ່າ ຄວນຈະມີສັນຍາກັນລະ ຫວ່າງ ບໍລິສັດ ຫຼ ເອກະຊົນ ກັບ ຊາວບ້ານ ເປັນລາຍລັກອັກສອນ ກ່ຳນົດຈັກປີ ແລະ ຊາວບ້ານໄດ້ ຮັບຜົນປະໂຫຍດຫຍັງແດ່. ເພາະໃນອານາຄົດ ຊາວບ້ານຈະໄດ້ນ່ຳໃຊ້ດິນດ່ັງກ່າວ ຊາວບ້ານຄິດວ່ າ ຖ້ຳທຸບລະຫວ່ າງ ການປູກໄມ້ວິກ ກັບປ່ອຍໃຫ້ປ່ ຳຟື້ນຟູເອງ ຈະເຫັນໄດ້ວ່ ຳ ການປ່ອຍໃຫ້ປ່ ຳຟື້ນຟູ ເອງຈະດີກວ່ ຳການປູກໄມ້.

ຕ່ໍກັບວຽກງານມອບດິນ-ມອບປ່ ຳ : ຍ້ອນການເພ່ີ້ມຂ້ຶ້ນຂອງພົນລະເມ ືອງ ແລະ ການຂະຫຍາຍ ຕົວທາງດ້ານເສດຖະກິດ ຈ່ຳເປັນຕ້ອງໄດ້ຈັດແບ່ງປ່ ຳປະເພດໃດຄວນໄດ້ອານຸລັກ, ປ້ອງກັນ ແລະ ນ່ຳໃຊ້ດິນເຂດໃດຄວນຈັດໄວ້ແສເ ດັ ກະສິ ກ ຳ ແລະ ແຂປ ຸ ກ ສ້ ຳ ງ. ການຈັດແບ່ງປ່ ຳ ແລະ ທ ີ ່ ດ ິ ນ ແຕ່ ລ ະ ປ ະ ເ ພ ດ ແ ມ ່ ນ ຊ າ ວ ບ ້ ານ ຕ ົ ກ ລ ົ ງ ເ ອ ກ ະ ພ າ ບ ກ ັ ນ ແ ລ ະ ລ ້ ຳ ງ ລ ະ ບ ຽ ບ ກ ານ ຄ ຸ ້ ຍ ຄ ອ ງ ນ ່ ຳ ໃ ຊ ້ ເ ອ ງ ຮ ູ ້ ຂ ອ ບ ເ ຂ ດ ເ ນ ື ້ ອ ທ ີ ່ ດ ິ ນ ແ ລ ະ ປ ່ ຳ ໄ ມ ້ ໄ ດ ້ ປ ່ ຳ ໆ ຈ ະ ແ ຈ ້ ງ ລ ັ ດ ຮ ັ ບ ຮ ອ ງ ສ ິ ດ ຕ ່ ຳ ງ ໆ ຂ ອ ງ ບ ້ ານ ຫ ລ ັ ງ ຈ າ ກ ມ ອ ບ ດ ິ ນ-ມ ອ ບ ປ ່ ຳ ແ ລ ້ ວ.

- ແນວຄິດຂອງເຈ້ົ້າຂອງໂຄງການປູກໄມ້ : ອ ີ ງ ໃ ສ ່ ແ ນ ວ ທ າ ງ ຂ ອ ງ ລ ັ ດ ເ ພ ື ່ ອ ຟ ື ້ ນ ຟ ູ ປ ູ ກ ໄ ມ ້ ເ ພ ື ່ ອ ທ ົ ດ ແ ທ ນ ເ ນ ື ້ ອ ທ ີ ່ ປ ່ ຳ ທ ີ ່ ຖ ືກ ທ ຳ ລ າ ຍ ລ ະ ນ ັ ້ ນ ຈ ້ ຳ ປ ູ ກ ໄ ມ ້ ວ ິ ກ ເ ພ ື ່ ອ ເ ປ ັ ນ ສ ິ ນ ຄ ້ ຳ ເ ພ າ ະ ເ ຂ ດ ດ ັ ່ ງ ກ ່ າ ວ ມ ີ ເ ງ ື ່ ອ ນ ໄ ຂ ລ ະ ດ ວ ກ ໃ ນ ການ ຂ ົ ນ ສ ົ ່ ງ ອ ອ ກ ຫ າ ງ ປ ະ ເ ທ ດ ທ ່ ຽ ງ ຄ ວ ນ ງ າ ມ ແ ລ ະ ອ ິ ກ ຢ ່ າ ງ ໆ ເ ພ ື ່ ອ ລ ້ ຳ ງ ລ າ ຍ ຮ ັ ບ ໃ ຫ ້ ແ ກ ່ ຊ າ ວ ບ ້ ານ ເ ຊ ັ ່ ນ : ຮ ັ ບ ຈ ້ ຳ ງ ເ ຮ ັ ດ ວ ຽ ກ ໃ ນ ພ ື ້ ນ ທ ີ ່ ໂ ຄ ງ ການ.

- ແນວຄວາມຄິດຂອງພະນັກງານລັດ : ການປູກໄມ້ ເພ ື ່ ອ ຟ ື ້ ນ ຟ ູ ປ ່ ຳ ໄ ມ ້ ປ ູ ກ ໄ ມ ້ ທ ົ ດ ແ ທ ນ ປ ່ ຳ ທ ີ ່ ຖ ືກ ທ ຳ ລ າ ຍ, ປ ່ ຳ ໄ ມ ້ ຊ າ ວ ບ ້ ານ ລ ັ ດ ຈ ະ ຮ ັ ບ ຮ ູ ້ ຕ ້ ອ ງ ຜ ່ ານ ການ ແ ບ ່ ງ ດ ິ ນ-ແ ບ ່ ງ ປ ່ ຳ ຫ ຼ ື ມ ອ ບ ດ ິ ນ ມ ອ ບ ປ ່ ຳ.

<u>ຂ້ໍ ສ ະ ເ ໜ ີ ເ ພ ີ ່ ມ ເ ຕ ີ ມ</u>

ໃ ຫ ້ ເ ຈ າ ະ ຈ ົ ້ ມ ເ ລ ື ອ ງ ປ ່ ຳ ສ ັ ກ ລ ິ ດ (ພ ື ້ ນ ທ ີ ່ ຮ ີ ດ ຄ ອ ງ ປ ະ ເ ພ ນ ິ ຂ ອ ງ ປ ະ ຊ າ ຊ ົ ນ).
ເ ຈ າ ະ ຈ ົ ້ ມ ຕ ົ ້ ມ ກ ່ ຽ ວ ກ ັ ບ ການ ເ ຮ ັ ດ ໄ ຮ ່ (ວ ິ ທ ີ ການ ແ ນ ວ ຄ ິ ດ ແ ລ ະ ຮ ີ ດ ຄ ອ ງ ປ ະ ເ ພ ນ ິ).
ຊ ອ ກ ຫ າ ຂ ້ ໍ ມ ູ ນ ກ ່ ຽ ວ ກ ັ ບ ການ ປ ູ ກ ໄ ມ ້ ໃ ຫ ຍ ່ ໄ ວ ຂ ອ ງ ທ ະ ນ າ ຄ ານ ພ ັ ດ ທ ະ ນ າ ອ າ ຊ ີ.
(Asian Development Bank : ADB)
ຫ າ ຂ ້ ໍ ມ ູ ນ ກ ່ ຽ ວ ກ ັ ບ ແ ນ ວ ຄ ິ ດ ໃ ນ ການ ປ ູ ກ ໄ ມ ້ ໃ ຫ ຍ ່ ໄ ວ.
ໃ ຫ ້ ມ ີ ບ ົ ດ ວ ິ ເ ຄ າ ະ ກ ່ ຽ ວ ກ ັ ບ ປ ະ ເ ພ ດ ປ ່ ຳ ແ ຕ ່ ເ ກ ົ ່ ຳ ມ າ ຈ ົ ນ ຮ ອ ດ ປ ັ ດ ຈ ຸ ບ ັ ນ.

PDF created with pdfFactory Pro trial version www.pdffactory.com